ພີ່ນ້ອງທີ່ຮັກ : ພຣະຄຳພີ ກໍຄື ຂໍ້ຄວາມຂ່າວສານຈາກພຣະເຈົ້າເຖິງເຮົາທັງຫຼາຍໃນໂລກນີ້, ຄົນສ່ວນໃຫຍ່ຈະຮູ້ສຶກວ່າພຣະຄຳພີເປັນເໝືອນຮູບຕໍ່ຂະໜາດໃຫຍ່; ພີ່ນ້ອງເຄີຍຕໍ່ຮູບພວກນັ້ນຈັກເທື່ອໜຶ່ງຫຼືບໍ? ຄືກ່ອນອື່ນຈະຕ້ອງຫາສິ້ນທີ່ເປັນມູມຂອງຮູບທັງສີ່ໃຫ້ໄດ້ກ່ອນ ແລ້ວກໍຫາສິ້ນທີ່ເປັນຂອບຮູບເອົາມາຕໍ່ກັນເປັນຂອບ, ຕໍ່ຈາກນັ້ນກໍຄ່ອຍໆຕໍ່ຮູບເຂົ້າກັນ ພາບກໍຈະຄ່ອຍໆປາກົດອອກມາ ເມື່ອໃສ່ສິ້ນສຸດທ້າຍລົງໄປກໍໄດ້ພາບທີ່ສົມບູນ.

ບົດຮຽນພຣະຄຳພີຈາກຍຸກສ້າງໂລກເຖິງຊີວິດພຣະເຢຊູຄຣິດຊຸດນີ້ມີສີ່ເຫຼັ້ມ, ເຫຼັ້ມທຳອິດເປັນເໝືອນສິ້ນສ່ວນທີ່ເປັນມູມຮູບຂອງພຣະຄຳພີ, ເຫຼັ້ມທີ່ສອງເປັນຂອບ ສ່ວນເຫຼັ້ມທີ່ສາມແລະສີ່ເປັນສິ້ນສ່ວນທີ່ຕໍ່ເປັນຮູບພາບໃນຂອບຊຶ່ງຈະເປັນພາບທີ່ງົດງາມຂອງພຣະຄຸນແລະຄວາມເມດຕາຂອງພຣະເຈົ້າ.

ທ້າຍສຸດຂອງປຶ້ມເຫຼັ້ມນີ້ຈະມີຄຳຖາມສັ້ນໆຂອງບົດຮຽນແຕ່ລະບົດ ເພື່ອຊ່ວຍໃຫ້ພວກເຮົາເຂົ້າໃຈເລື່ອງທີ່ອ່ານແຈ້ງຂຶ້ນ. ຂໍແນະນຳໃຫ້ອ່ານຄຳຖາມເຫຼົ່ານັ້ນກ່ອນ ແລ້ວຈຶ່ງໄປອ່ານເນື້ອເລື່ອງແລະເມື່ອອ່ານເນື້ອເລື່ອງສຳເລັດແລ້ວ ກໍກັບມາຕອບຄຳຖາມເລີຍ ຈະດີກວ່າ.

ເມື່ອອ່ານໜັງສືເຫຼັ້ມນີ້ ແລະຕອບຄຳຖາມຄົບໝົດທຸກບົດແລ້ວໃຫ້ພີ່ນ້ອງຄ່ອຍໆຈີກໜ້າທີ່ເປັນຄຳຖາມເຫຼົ່ານັ້ນໃສ່ຊອງຕິດສະແຕມ ແລ້ວສົ່ງກັບມາຕາມທີ່ຢູ່ທີ່ແຈ້ງໄວ້, ສ່ວນໜັງສືນັ້ນພວກເຮົາຂໍມອບເປັນຂອງຂວັນໃຫ້ແກ່ພີ່ນ້ອງເກັບໄວ້ໄດ້ເລີຍແລະອີກປະມານສອງ-ສາມອາທິດ ພວກເຮົາຈະສົ່ງເຫຼັ້ມຕໍ່ໄປໃຫ້.

ຖ້າມີບັນຫາໃດທີ່ບໍ່ເຂົ້າໃຈ ຢາກໃຫ້ພວກເຮົາຊ່ວຍເຫຼືອ ກະລຸນາຂຽນຄຳຖາມສົ່ງມາຖາມໄດ້ຕາມທີ່ຢູ່ຂ້າງລຸ່ມນີ້:

## ຄຳຖາມບົດທີ 6

1. ຜູ້ຄົນເລີ່ມກໍ່ສ້າງອັນໃດ?

   ..................................................................................

   ..................................................................................

2. ພວກເຂົາເຮັດຢ່າງນັ້ນເພື່ອຫຍັງ?

   ..................................................................................

   ..................................................................................

3. ພຣະເຈົ້າຊົງລ່ວງຮູ້ແຜນການຂອງພວກເຂົາຫຼືບໍ?

   ..................................................................................

   ..................................................................................

4. ພຣະເຈົ້າຊົງຕອບໂຕ້ການກະທຳນັ້ນຢ່າງໃດ?

   ..................................................................................

   ..................................................................................

5. ຜົນທີ່ເກີດຂຶ້ນຄືຫຍັງ?

   ..................................................................................

   ..................................................................................

**ຄ່ອຍໆຈີກສ່ວນນີ້ແລະສົ່ງໄປທີ່:**



# ບົດທີ 1
# ການເລີ່ມຕົ້ນ

ສົມມຸດວ່າທ່ານມາຢ້ຽມຢາມທີ່ເຮືອນຂອງຂ້າພະເຈົ້າແລະທ່ານສັງເກດເຫັນລາບຊີ້ນທີ່ຫາກໍເຮັດແລ້ວໃໝ່ໆວາງຢູ່ເທິງໂຕະອາຫານ ທັງມີກິ່ນຫອມແລະເປັນຕາແຊບ, ແລ້ວທ່ານກໍເຫັນແມ່ຂອງຂ້າພະເຈົ້າກຳລັງລ້າງຜັກກັບລາບຢູ່ ທ່ານຍັງເຫັນ ມີດ, ຊຽງ, ຖ້ວຍ, ຊາມ, ແກ້ວເຂົ້າຂົ້ວ, ແກ້ວປາແດກແລະບ່ວງວາງເດຍລະດາດຢູ່ເທິງໂຕະແຕ່ງກິນ ນອກຈາກນີ້ທ່ານຍັງເຫັນປຶ້ມຕຳລາການເຮັດລາບແປະຕິດຢູ່ກັບຕູ້ເຊິ່ງຢູ່ເໜືອໂຕະແຕ່ງກິນ ເບິ່ງຄືວ່າລາວໄດ້ເຮັດສິ່ງໃດສິ່ງໜຶ່ງໄວ້? ຄຳຕອບກໍຄືລາວໄດ້ເຮັດລາບ ທ່ານໄດ້ເຫັນຕອນທີ່ລາວກຳລັງປຸງລາບນັ້ນບໍ? ບໍ່ເລີຍ ແຕ່ພະຍານຫຼັກຖານກໍມີຢູ່ເຕັມໄປໝົດແລະຖ້າທ່ານຄິດວ່າລາວເປັນຄົນເຮັດລາບນັ້ນຂຶ້ນມາແມ່ນຖືກຕ້ອງແລ້ວ; ມີຫຍັງແດ່ທີ່ເຮັດໃຫ້ທ່ານຄິດວ່າລາວເປັນຄົນແຕ່ງອາຫານນັ້ນໂດຍທີ່ທ່ານບໍ່ໄດ້ເຫັນຕອນທີ່ລາວກຳລັງປຸງລາບນັ້ນ.

- ລາວຮູ້ວິທີປຸງລາບ.
- ລາວສາມາດອ່ານຂັ້ນຕອນການເຮັດລາບຈາກປຶ້ມຕຳລານັ້ນໄດ້.
- ລາວສາມາດເຮັດສິ່ງຕ່າງໆຕາມລຳດັບໄດ້.
- ລາວເປັນຄົນທີ່ມີຄວາມຄິດສ້າງສັນ (ຄືສາມາດນຳເອົາເຄື່ອງປະກອບທີ່ຫຼາກຫຼາຍມາປຸງແຕ່ງເປັນຈານລາບທີ່ມີໜ້າຕາໜ້າຮັບປະທານ).

• ລາວສາມາໃຊ້ຄວາມລະມັດລະວັງໄດ້(ຄືໃນຂະນະທີ່ລາວຂີ້ວເຂົ້າຂີ້ວລາວບໍ່ໄດ້ເຮັດໃຫ້ໄຟໄໝ້ຕົວລາວຫຼືໄໝ້ເຮືອນຄົວ).

ພວກເຮົາຄວນຈະຄິດໃນລັກສະນະດຽວກັນນີ້ຂະນະທີ່ພວກເຮົາອ່ານຂໍ້ພຣະຄຳພີຂໍ້ທຳອິດໃນພຣະຄຳຂອງພຣະເຈົ້າ.

*ປະຖົມມະການ 1:1 "ເມື່ອຕົ້ນເດີມ ພຣະເຈົ້າໄດ້ເນລະມິດສ້າງຟ້າສະຫວັນແລະແຜ່ນດິນໂລກ".*



ເຮົາເຫັນພຣະເຈົ້າຊົງເນລະມິດສ້າງຟ້າແລະແຜ່ນດິນໂລກຫຼືບໍ? ບໍ່ເລີຍ ເຮົາພຽງແຕ່"ກ້າວເຂົ້າໄປ" ໃນພຣະຄຳພີເຫຼັ້ມນີ້ ເໝືອນຢ່າງທີ່ທ່ານກ້າວເຂົ້າໄປໃນເຮືອນຂອງຂ້າພະເຈົ້າແລະເຫັນທຸກຢ່າງວາງຢູ່ເທິງໂຕະ, ເຮົາສາມາດເຫັນວັດຖຸສິ່ງຂອງເທິງທ້ອງຟ້າເຊັ່ນ: ດວງດາວແລະດາວເຄາະຕ່າງໆ ໃນທຳນອງດຽວກັນເຮົາສາມາດເຫັນສິ່ງຕ່າງໆເທິງໂລກເຊັ່ນ: ພູເຂົາ, ມະຫາສະໝຸດ, ຕົ້ນໄມ້, ສັດ



## ຄຳຖາມບົດທີ 5

1. ຄົນສ່ວນໃຫຍ່ຮັກແລະເຊື່ອຟັງພຣະເຈົ້າຫຼືບໍ່?

.................................................................................

2. ພຣະເຈົ້າຕັດວ່າພຣະອົງຈະເຮັດຢ່າງໃດກັບຄົນທີ່ບໍ່ຍອມກັບໃຈສຳນຶກຜິດ?

.................................................................................

3. ເປັນຫຍັງພຣະເຈົ້າຈິ່ງຕັດສິນພຣະໄທຊ່ວຍໂນອາ?

.................................................................................

4. ພຣະເຈົ້າຊົງສັ່ງໃຫ້ໂນອາເຮັດຫຍັງ?

.................................................................................

5. ພຣະເຈົ້າຊົງສັ່ງໃຫ້ໂນອາຕັ້ງປະຕູໄວ້ທີ່ເຮືອເທົ່າໃດບານ?

.................................................................................

6. ພຣະເຈົ້າຊົງລໍຄອຍໃຫ້ຄົນໃນສະໄໝໂນອາກັບໃຈສຳນຶກຜິດດົນເທົ່າໃດ?

.................................................................................

7. ໃຜເປັນຜູ້ປິດປະຕູເຮືອ?

.................................................................................

8. ມີໃຜຈະລອດພົ້ນຈາກການພິພາກສາຂອງພຣະເຈົ້າໄດ້ແດ່?

.................................................................................

9. ຄົນທີ່ຢູ່ນອກເຮືອມີໃຜແດ່ທີ່ລອດຈາກຄວາມຕາຍ?

.................................................................................

10. ພຣະເຈົ້າຊົງໃຫ້ອັນໃດເປັນເຄື່ອງໝາຍຂອງຄຳສັນຍາທີ່ວ່າພຣະອົງຈະບໍ່ໃຫ້ມີນ້ຳມາຖ້ວມທຳລາຍໂລກອີກ?

.................................................................................

11. ພຣະເຈົ້າຊົງຮັກສາສັນຍາຂອງພຣະອົງຫຼືບໍ່?

.................................................................................

## ຄຳຖາມບົດທີ 4

1. ເປັນຫຍັງພຣະເຈົ້າຊົງພໍພຣະໄທເຄື່ອງບູຊາຂອງອາເບັນ?

........................................................................

........................................................................

2. ເປັນຫຍັງພຣະເຈົ້າບໍ່ຊົງພໍພຣະໄທເຄື່ອງບູຊາຂອງກາອິນ?

........................................................................

........................................................................

3. ເປັນຫຍັງພຣະເຈົ້າຈິ່ງພະຍາຍາມຈະຊີ້ແຈງເຫດຜົນໃຫ້ກາອິນຮູ້?

........................................................................

4. ກາອິນເຊື່ອແລະເຫັນດ້ວຍກັບພຣະເຈົ້າຫຼືບໍ່?

........................................................................

5. ກາອິນເຮັດຫຍັງກັບອາເບັນນ້ອງຊາຍຂອງຕົນ?.

........................................................................

6. ພຣະເຈົ້າຊົງລ່ວງຮູ້ເຖິງສິ່ງທີ່ກາອິນເຮັດໄດ້ຢ່າງໃດ?

........................................................................

........................................................................

7. ພຣະເຈົ້າຈະຊົງລົງໂທດຄົນທີ່ເວົ້າແລະເຮັດສິ່ງຊົ່ວຮ້າຍຕໍ່ຄົນອື່ນຫຼືບໍ່?

........................................................................

........................................................................



ນາໆຊະນິດແລະມະນຸດ ໂດຍເຫດທີ່ພຣະເຈົ້າຊົງເປັນຜູ້ເນລະມິດສ້າງສິ່ງສາລະພັດເຫຼົ່ານີ້ທັງໝົດ ດັ່ງນັ້ນສິ່ງທີ່ໜ້າຈະເປັນຈິງໃນເລື່ອງທີ່ກ່ຽວກັບພຣະອົງນັ້ນ ຄືຫຍັງ?

- ພຣະເຈົ້າຕ້ອງມີຄວາມຮອບຮູ້ທຸກຢ່າງຈິ່ງສາມາດເນລະມິດສ້າງໂລກຂຶ້ນມາໄດ້.
- ພຣະເຈົ້າຕ້ອງມີລິດອຳນາດທຸກຢ່າງ ຈິ່ງສາມາດເນລະມິດສ້າງໂລກຂຶ້ນມາໄດ້ (ມີລິດທານຸພາບສູງສຸດ).
- ພຣະເຈົ້າຊົງດຳລົງຢູ່ເປັນນິລັນດອນ ພຣະອົງຊົງດຳລົງຢູ່ກ່ອນການເນລະມິດສ້າງແລະບໍ່ມີຈຸດເລີ່ມຕົ້ນ ແລະເນື່ອງຈາກພຣະເຈົ້າຊົງເປັນຜູ້ດຽວທີ່ດຳລົງຢູ່ຕັ້ງແຕ່ເລີ່ມຕົ້ນ; ດັ່ງນັ້ນພຣະອົງຈິ່ງເປັນຜູ້ດຽວເທົ່ານັ້ນທີ່ຈະສາມາດເປີດເຜີຍຄວາມຈິງໃຫ້ເຮົາຮູ້ໄດ້ວ່າ ເກີດຫຍັງຂຶ້ນຕັ້ງແຕ່ຈຸດເລີ່ມຕົ້ນ.
- ພຣະເຈົ້າບໍ່ຕ້ອງເພິ່ງພາສິ່ງໃດໆຫຼືເພິ່ງພາໃຜ ພຣະອົງບໍ່ໄດ້ສ້າງພຣະອົງຂຶ້ນມາເອງ ມະນຸດເຮົາຕ້ອງການອາກາດ, ອາຫານ ແລະນ້ຳ ເພື່ອຈະສາມາດດຳລົງຊີວິດຢູ່ໄດ້ ແຕ່ພຣະເຈົ້າບໍ່ຕ້ອງການສິ່ງເຫຼົ່ານີ້ພຣະເຈົ້າບໍ່ຕ້ອງການ ໂລກ, ດວງອາທິດ,ອາກາດ, ອາຫານຫຼືນ້ຳ ເພາະວ່າພຣະອົງຊົງດຳລົງຢູ່ກ່ອນສິ່ງສາລະພັດເຫຼົ່ານີ້.
- ພຣະເຈົ້າຊົງເປັນຜູ້ຄອບຄອງສູງສຸດ ພຣະອົງຊົງເປັນເຈົ້າຂອງທຸກສິ່ງທີ່ພຣະອົງເນລະມິດສ້າງຂຶ້ນ.
- ພຣະເຈົ້າຊົງມີພຣະລັກສະນະເປັນບຸກຄົນ ຖ້າເຮົາໄປເຫັນຮູບແຕ້ມຮູບໜຶ່ງແລະເຮົາຢາກຈະຮູ້ຕົ້ນກຳເນີດຂອງຮູບແຕ້ມນີ້ເຮົາກໍຈະຕ້ອງຖາມວ່າ "ໃຜເປັນຜູ້ແຕ້ມພາບນີ້" ບໍ່

ແມ່ນຖາມວ່າ "ສິ່ງໃດແຕ້ມພາບນີ້" ຄວາມຄິດສ້າງສັນໃດໆຈຳເປັນຕ້ອງເກີດຂຶ້ນຈາກລັກສະນະສະເພາະຂອງບຸກຄົນເທົ່ານັ້ນ.

*ປະຖົມມະການ 1:2 ໂລກບໍ່ທັນມີຮູບຮ່າງແລະຍັງວ່າງເປົ່າຢູ່. ຄວາມມືດໄດ້ຫຸ້ມຫໍ່ມະຫາສະໝຸດອັນກວ້າງໃຫຍ່ໄພສານແລະລິດເດດຂອງພຣະເຈົ້າໄດ້ວົນວຽນຢູ່ເທິງໜ້ານໍ້າ.*

ພຣະຄຳພີຂໍ້ນີ້ບອກໃຫ້ເຮົາຮູ້ວ່າ ພຣະເຈົ້າຊົງເປັນພຣະວິນຍານ ເຊິ່ງໝາຍຄວາມວ່າ ເຮົາບໍ່ສາມາດຈະເບິ່ງເຫັນພຣະອົງໄດ້, ພຣະເຈົ້າບໍ່ໄດ້ມີເນື້ອໜັງແລະກະດູກເໝືອນຢ່າງມະນຸດ ແລະສັດທົ່ວໄປ ພຣະອົງບໍ່ມີຮ່າງກາຍທີ່ເປັນວັດຖຸ ດັ່ງນັ້ນ ພຣະອົງຈຶ່ງບໍ່ມີຄວາມຕ້ອງການທາງດ້ານຮ່າງກາຍ ມະນຸດມີຂໍ້ຈຳກັດໃນດ້ານຄວາມເຂົ້າໃຈ ແລະຄວາມຕ້ອງການທາງດ້ານຮ່າງກາຍ ແຕ່ພຣະເຈົ້າບໍ່ມີຂໍ້ຈຳກັດເຫຼົ່ານີ້ເລີຍ ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງໃນເວລາດຽວກັນ.

ພຣະທຳປະຖົມມະການບົດທີ 1 ໄດ້ອະທິບາຍໃຫ້ເຮົາຮູ້ວ່າພຣະເຈົ້າຊົງສ້າງສິ່ງສາລະພັດທຸກສິ່ງໃນຈັກກະວານແລະເທິງແຜ່ນດິນໂລກພາຍໃນ 6 ວັນໂດຍພຣະອົງໄດ້ຊົງສ້າງຄວາມສະຫວ່າງໃນມື້ທຳອິດ.

*ປະຖົມມະການ 1:3 ພຣະເຈົ້າໄດ້ສັ່ງວ່າ "ໃຫ້ຄວາມສະຫວ່າງສ່ອງຂຶ້ນ" ແລະກໍເປັນດັ່ງນັ້ນ.*



## ຄຳຖາມບົດທີ 3

1. ຊາຕານບອກເອວາວ່າຈະເກີດຫຍັງຂຶ້ນກັບພວກເຂົາຖ້າກິນໝາກໄມ້ຕ້ອງຫ້າມນັ້ນ?

   ....................................................................................

2. ຊາຕານຢາກໃຫ້ເຮົາເຊື່ອຟັງພຣະຄຳຂອງພຣະເຈົ້າຫຼືບໍ?

   ....................................................................................

3. ໃຜເວົ້າຄວາມຈິງ ພຣະເຈົ້າຫຼືຊາຕານ?

   ....................................................................................

4. ອາດາມກັບເອວາເຮັດຢ່າງໃດເມື່ອຮູ້ວ່າຕົນເປືອຍກາຍຢູ່?

   ....................................................................................

   ....................................................................................

5. ໃຜຄືຜູ້ທີ່ພຣະເຈົ້າຊົງສັນຍາວ່າຈະຊົງສົ່ງມາປົດປ່ອຍຄົນຈາກບາບ?

   ....................................................................................

   ....................................................................................

6. ພຣະເຈົ້າຊົງສາບແຊ່ງຜູ້ຍິງວ່າຢ່າງໃດ?

   ....................................................................................

   ....................................................................................

7. ພຣະເຈົ້າຊົງສາບແຊ່ງຜູ້ຊາຍວ່າຢ່າງໃດ?

   ....................................................................................

   ....................................................................................

## ຄຳຖາມບົດທີ 2

1. ພຣະເຈົ້າຊົງຫ້າມອາດາມກິນໝາກໄມ້ຈາກຕົ້ນໄມ້ຈັກຕົ້ນ?
.......................................................................................
2. ຕົ້ນໄມ້ຕົ້ນນັ້ນຊື່ວ່າຫຍັງ?
.......................................................................................
3. ພຣະເຈົ້າບອກອາດາມວ່າເຂົາຈະເປັນຢ່າງໃດ ຖ້າກິນຜົນຂອງຕົ້ນໄມ້ນັ້ນ?
.......................................................................................
4. ພຣະເຈົ້າຕັດວ່າພວກເຂົາຈະຕ້ອງຕາຍ ຊົງໝາຍເຖິງຄວາມຕາຍສາມດ້ານໄດ້ແກ່ດ້ານໃດແດ່?
ກ.......................................................................................
ຂ.......................................................................................
ຄ.......................................................................................
5. ໃຜເປັນຜູ້ສ້າງວິນຍານທັງຫຼາຍ?
.......................................................................................
6. ພຣະເຈົ້າຊົງສ້າງວິນຍານດີນຳ ວິນຍານຊົ່ວນຳແມ່ນຫຼືບໍ່?
.......................................................................................
7. ເທວະດາທີ່ງາມ ແລະສະຫຼາດທີ່ສຸດທີ່ພຣະເຈົ້າຊົງສ້າງຄືໃຜ?
.......................................................................................
8. ລູຊີເຟີເຮັດຫຍັງ?
.......................................................................................
9. ພຣະເຈົ້າຈັດຕຽມສະຖານທີ່ຫຍັງໄວ້ໃຫ້ລູຊີເຟີແລະເທວະດາທີ່ເປັນພວກຂອງມັນເພື່ອເປັນການລົງໂທດ?
.......................................................................................
10. ລູຊີເຟີປ່ຽນຊື່ເປັນຫຍັງ?
.......................................................................................



ພຣະເຈົ້າຊົງສ້າງຄວາມສະຫວ່າງໂດຍການສັ່ງເທົ່ານັ້ນການເນລະມິດສ້າງເລີ່ມຕົ້ນຈາກລິດອຳນາດແຫ່ງຄຳສັ່ງຂອງພຣະອົງສ່ວນຂໍ້ພຣະຄຳພີອື່ນໆໃນບົດນີ້ບອກໃຫ້ເຮົາຮູ້ເຖິງການທີ່ພຣະເຈົ້າຊົງເນລະມິດສ້າງສາລະພັດທຸກສິ່ງໂດຍການສັ່ງນັ້ນເປັນແນວໃດ, ດັ່ງນັ້ນສິ່ງທີ່ມີພະລັງຍິ່ງໃຫຍ່ທີ່ສຸດໃນຈັກກະວານກໍຄື ພຣະຄຳຂອງພຣະເຈົ້ານັ້ນເອງ ແມ່ນແຕ່ນັກວິທະຍາສາດໃນປະຈຸບັນຍັງບໍ່ສາມາດເຂົ້າໃຈໄດ້ຢ່າງຊັດເຈນເລີຍວ່າແສງສະຫວ່າງຄືຫຍັງ ຢ່າວ່າແຕ່ຈະສ້າງມັນຂຶ້ນມາຈາກຄວາມວ່າງເປົ່າເລີຍ.

*ປະຖົມມະການ 1:4-5 ພຣະອົງຊົມຄວາມສະຫວ່າງນັ້ນດ້ວຍຄວາມພໍໃຈ ພຣະອົງແຍກຄວາມສະຫວ່າງອອກຈາກຄວາມມືດ ແລະເອີ້ນຄວາມສະຫວ່າງນັ້ນວ່າ "ກາງເວັນ" ແລະເອີ້ນຄວາມມືດນັ້ນວ່າ "ກາງຄືນ" ມື້ຄືນຜ່ານໄປແລະມື້ເຊົ້າຕໍ່ຈາກມານັ້ນແມ່ນມື້ທີໜຶ່ງ.*

ພຣະຄຳພີຂໍ້ນີ້ກ່າວວ່າ ພຣະເຈົ້າຊົງສ້າງຄວາມສະຫວ່າງມາຢ່າງດີ ຊຶ່ງນັ້ນໝາຍຄວາມວ່າ ພຣະເຈົ້າເອງກໍດີແລະປະເສີດດ້ວຍແລະຕ້ອງເປັນເລື່ອງທີ່ສອດຄ່ອງກັນຢ່າງສົມເຫດສົມຜົນທີ່ຈະເຊື່ອວ່າ ພຣະເຈົ້າທີ່ປະເສີດສ້າງສິ່ງດີໆຂຶ້ນມາຫຼາຍກວ່າທີ່ຈະເຊື່ອວ່າ ພະທີ່ຊົ່ວສ້າງສິ່ງທີ່ດີ.

ພຣະເຈົ້າຊົງສ້າງ ອາກາດແລະທ້ອງຟ້າ ໃນວັນທີສອງ (ຂໍ້ 6-8) ຊຶ່ງເປັນບໍລິເວນທີ່ນົກໃຊ້ບິນ ແລ້ວພຣະອົງກໍຊົງສ້າງບ່ອນແຫ້ງ, ມະຫາສະໝຸດ ແລະອານາຈັກພືດຜັກທຸກຊະນິດເທິງແຜ່ນດິນໂລກໃນວັນທີສາມ (ຂໍ້ 9-13) ພຣະເຈົ້າກຳລັງຈັດຕຽມແຜ່ນດິນ

ໂລກເພື່ອໃຫ້ເປັນທີ່ອາໄສຂອງມະນຸດ ມະນຸດຕ້ອງການອົກຊີສຳລັບຫາຍໃຈ ດັ່ງນັ້ນພຣະອົງຈຶ່ງຊົງສ້າງອານາຈັກພືດເພື່ອເປັນແຫຼ່ງຜະລິດອົກຊີ.

*ປະຖົມມະການ 1:11-12 ແລ້ວພຣະອົງສັ່ງວ່າ "ໃຫ້ແຜ່ນດິນເກີດພືດທຸກຊະນິດທັງແນວເປັນເມັດແລະແນວເປັນໝາກ" ແລະກໍເປັນດັ່ງນັ້ນ ສະນັ້ນພືດທຸກຊະນິດຈຶ່ງເກີດຂຶ້ນມາຕາມທີ່ພຣະອົງໄດ້ສັ່ງ, ພຣະອົງຊົມສິ່ງທີ່ໄດ້ເນລະມິດສ້າງຂຶ້ນມາແລ້ວກໍພໍໃຈ.*

ຂໍ້ພຣະຄຳພີຕອນນີ້ໄດ້ບອກເຮົາເຖິງ 3 ເທື່ອວ່າ ພືດຜັກແລະຕົ້ນໄມ້ໄດ້ຖືກສ້າງຂຶ້ນ "ຕາມຊະນິດຂອງມັນ" ຂໍ້ຄວາມຕອນນີ້ຄົງຈະບໍ່ມີໃຜເຂົ້າໃຈຜິດພາດຢ່າງແນ່ນອນ ໝາກກ້ຽງມີແກ່ນໝາກກ້ຽງຢູ່ໃນໜ່ວຍຂອງມັນ ອາງຸ່ນກໍມີແກ່ນອາງຸ່ນຢູ່ໃນໝາກຂອງມັນ ເວົ້າອີກຢ່າງໜຶ່ງໄດ້ວ່າ ພຣະເຈົ້າຊົງອອກແບບຄວາມເປັນລະບຽບ, ໂຄງສ້າງແລະມີພຣະປະສົງໄວ້ໃນໂລກ. ທ່ານບໍ່ສາມາດພົບແກ່ນໝາກໂມຢູ່ໃນໝາກກ້ຽງຢ່າງແນ່ນອນ ພຣະຄຳພີ ຂໍ້ 20-25 ທ່ານຈະພົບລັກສະນະດຽວກັນນີ້ກັບນົກ, ສັດທະເລແລະສັດບົກ. ນົກອິນຊີວາງໄຂ່ທີ່ຟັກອອກມາເປັນລູກນົກອິນຊີ ບໍ່ແມ່ນຟັກອອກມາເປັນນົກແກ້ວ,ແມ່ງົວຈະບໍ່ເກີດລູກອອກມາເປັນລູກໝູ, ສິ່ງທີ່ມີຊີວິດທຸກຊະນິດຕ່າງໆກໍແຜ່ພັນ "ຕາມຊະນິດຂອງມັນ" ທັງນັ້ນ.

ພຣະເຈົ້າຊົງສ້າງດວງອາທິດ, ດວງຈັນ ແລະດາວທັງໝົດໃນມື້ທີສີ່ (ຂໍ້ 14-19) ທ່ານເຄີຍແຫງນໜ້າເບິ່ງທ້ອງຟ້າຕອນກາງຄືນແລະເບິ່ງເຫັນດວງດາວຫຼາຍຮ້ອຍດວງທີ່ກຳລັງສ່ອງແສງລະຍິບລະຍັບຢູ່ຫຼືບໍ່? ພຣະເຈົ້າພຽງແຕ່ສັ່ງເທົ່ານັ້ນ ດວງດາວທັງໝົດເຫຼົ່ານີ້ກໍປາ



## ຄຳຖາມບົດທີ 1

1. ມີເວລາໃດແດ່ທີ່ພຣະເຈົ້າບໍ່ໄດ້ຊົງດຳລົງພຣະຊົນຢູ່?

.................................................................

2. ໃຜສ້າງພຣະເຈົ້າ?

.................................................................

3. ພຣະເຈົ້າຊົງຕ້ອງເພິ່ງພາອາໄສຫຍັງເພື່ອພຣະອົງຈະໄດ້ຊົງດຳລົງພຣະຊົນຢູ່?

.................................................................

4. ຜູ້ດຽວທີ່ສາມາດບອກຄວາມຈິງວ່າມີຫຍັງເກີດຂຶ້ນແດ່ໃນປະຖົມການນັ້ນຄືໃຜ?

.................................................................

5. ພຣະເຈົ້າຊົງສ້າງຟ້າສະຫວັນແລະແຜ່ນດິນໂລກດ້ວຍອັນໃດ?

.................................................................

6. ພຣະເຈົ້າຊົງສ້າງມະນຸດໃຫ້ເໝືອນກັບໃຜ?

.................................................................

7. ເປັນຫຍັງພຣະເຈົ້າຊົງສ້າງມະນຸດໃຫ້ມີຈິດໃຈ (ຄວາມຮູ້ສຶກນຶກຄິດ)?

.................................................................

8. ເປັນຫຍັງພຣະເຈົ້າຊົງສ້າງມະນຸດໃຫ້ມີອາລົມຕ່າງໆ?

.................................................................

9. ເປັນຫຍັງພຣະເຈົ້າຊົງສ້າງມະນຸດໃຫ້ມີຄວາມສາມາດໃນການເລືອກແລະຕັດສິນໃຈເອງໄດ້?

.................................................................

## ຄຳຊີ້ແຈງ

ເມື່ອອ່ານບົດຮຽນຕ່າງໆແລະຕອບຄຳຖາມໃນໜ້າຖັດໄປຮຽບຮ້ອຍແລ້ວ ໃຫ້ພີ່ນ້ອງຄ່ອຍໆຈີກໜ້າທີ່ມີຄຳຖາມຄຳຕອບເຫຼົ່ານັ້ນໃສ່ຊອງ ຕິດສະແຕມ ສົ່ງມາຕາມທີ່ຢູ່ທີ່ແຈ້ງໄວ້ ສ່ວນໜັງສືເຫຼັ້ມ 1 ນັ້ນພວກເຮົາຂໍມອບເປັນຂອງຂວັນແກ່ທ່ານ ແລະພວກເຮົາຈະສົ່ງເຫຼັ້ມ ທີ 2 ໄປໃຫ້ພາຍໃນ 2-3 ອາທິດໜ້າ.

ທຸກຄຳຕອບຢູ່ໃນໜັງສືຮຽນ ອ່ານແລະເອົາຄຳຕອບອອກມາຈາກໜັງສືຮຽນ.



ເກີດຂຶ້ນມາ, ພຣະເຈົ້າຊົງສ້າງອານາຈັກສັດນ້ຳທຸກຊະນິດແລະຊົງສ້າງນົກໃນວັນທີ່ຫ້າ (ຂໍ້ 20-23) ມີພຽງແຕ່ພຣະເຈົ້າຜູ້ຊົງລິດທານຸພາບແລະຮອບຮູ້ທຸກສິ່ງສາລະພັດທີ່ພຽງແຕ່ສັ່ງເທົ່ານັ້ນ ສິ່ງມີຊີວິດເຫຼົ່ານີ້ທຸກສິ່ງກໍປາກົດຂຶ້ນມາ.

ພຣະເຈົ້າຊົງເນລະມິດສ້າງໂລກຂອງສັດໃນວັນທີ່ຫົກ (ຂໍ້ 24-25) ພຣະອົງຊົງສ້າງສັດນາໆຊະນິດຢ່າງຫຼວງຫຼາຍ ມີພຽງພຣະເຈົ້າເທົ່ານັ້ນທີ່ມີລິດອຳນາດແລະຄວາມຮອບຮູ້ທີ່ຈະເນລະມິດສ້າງສິ່ງຕ່າງໆເຫຼົ່ານີ້ໄດ້ ແລະໃນທີ່ສຸດກໍເຖິງເວລາທີ່ພຣະເຈົ້າຈະສ້າງສິ່ງທີ່ຍິ່ງໃຫຍ່ທີ່ສຸດຄື: **ມະນຸດ** ນັ້ນເອງ ພຣະອົງຊົງໃຊ້ເວລາ 6 ມື້ສຸດທ້າຍໃນການຈັດຕຽມແຜ່ນດິນໂລກສຳລັບມະນຸດ ພຣະເຈົ້າຊົງສ້າງຄວາມສະຫວ່າງເພື່ອມະນຸດຈະເບິ່ງເຫັນໄດ້ ພຣະເຈົ້າຊົງສ້າງທີ່ແຫ້ງເພື່ອໃຫ້ມະນຸດໃຊ້ເປັນທີ່ຢູ່ອາໄສ ພຣະເຈົ້າຊົງສ້າງຕົ້ນໄມ້ເພື່ອມະນຸດຈະສາມາດເຮັດສິ່ງຕ່າງໆຈາກໄມ້ແລະໄດ້ກິນຜົນຈາກຕົ້ນຂອງມັນໄດ້ ພຣະເຈົ້າຊົງໃຫ້ອົກຊີເກີດຂຶ້ນເພື່ອມະນຸດຈະສາມາດຫາຍໃຈໄດ້.

*ປະຖົມມະການ 1:26 ແລ້ວພຣະເຈົ້າກໍກ່າວວ່າ "ບັດນີ້ເຮົາຈະສ້າງມະນຸດໃຫ້ຄ້າຍຄືເຮົາ ເຂົາຈະມີອຳນາດເໜືອປາ, ນົກ, ສັດທັງໝົດ ບໍ່ວ່າສັດລ້ຽງຫຼືສັດປ່າ ສັດໃຫຍ່ຫຼືສັດນ້ອຍກໍດີ".*

ມະນຸດໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້ານີ້ບໍ່ໄດ້ໝາຍຄວາມວ່າມະນຸດມີຮ່າງກາຍເໝືອນກັບພຣະເຈົ້າ ຍິ່ງໄປກວ່ານັ້ນຈະເຫັນໄດ້ວ່າ ມະນຸດເຮົາທຸກຄົນມີຄວາມສູງ ນ້ຳໜັກແລະ

ສີຜິວທີ່ແຕກຕ່າງກັນ, ພຣະລັກສະນະນັ້ນ ໝາຍຄວາມວ່າ ເຮົາໄດ້ຖືກສ້າງຂຶ້ນໃຫ້ມີຈິດໃຈ, ມີອາລົມແລະຄວາມຮູ້ສຶກ ແລະມີໃຈປາຖະໜາເຊັ່ນດຽວກັບພຣະເຈົ້າ.

ພຣະເຈົ້າຊົງສ້າງມະນຸດໃຫ້ມີຈິດໃຈເພື່ອມະນຸດຈະມີຄວາມສາມາດທີ່ຈະຮູ້ຈັກພຣະເຈົ້າໄດ້ ແລະເນື່ອງຈາກພຣະອົງຊົງປາຖະໜາທີ່ຈະຕິດຕໍ່ສື່ສານກັບມະນຸດ ພຣະອົງຈິ່ງຊົງສ້າງໃຫ້ມະນຸດມີຄວາມສາມາດທີ່ຈະຕິດຕໍ່ສື່ສານໄດ້. ພຣະເຈົ້າຊົງສ້າງມະນຸດໃຫ້ມີອາລົມແລະຄວາມຮູ້ສຶກ ມະນຸດຈິ່ງສາມາດທີ່ຈະຮັກ, ຮູ້ສຶກເສົ້າໃຈ ແລະມີປະສົບການກັບຄວາມສຸກໄດ້ ເພາະວ່າພຣະເຈົ້າກໍຊົງມີອາລົມແລະຄວາມຮູ້ສຶກເຫຼົ່ານີ້ເຊັ່ນກັນ.

ພຣະເຈົ້າຊົງສ້າງມະນຸດໃຫ້ມີໃຈປາຖະໜາ ເພາະວ່າພຣະອົງຊົງປະສົງໃຫ້ມະນຸດສາມາດຕັດສິນໃຈໄດ້ ມະນຸດຕ້ອງຕັດສິນໃຈໃນຫຼາຍຢ່າງຕະຫຼອດມື້ໜຶ່ງເຊັ່ນ ຈະຕື່ນນອນເມື່ອໃດ? ຈະນຸ່ງເສື້ອຜ້າຜືນໃດ? ຈະກິນຫຍັງ? ຈະເຮັດວຽກຢູ່ໃສ? ຈະເວົ້າອັນໃດ? ຈະເບິ່ງອັນໃດ? ຈະຟັງອັນໃດ? ແລະຈະໄປໃສ? ພຣະເຈົ້າຊົງສ້າງດວງຕາເວັນ ດວງຈັນ ແລະດວງດາວຕ່າງໆ ເພື່ອໃຫ້ມັນເຮັດໜ້າທີ່ຢ່າງດຽວກັນທຸກມື້ທຸກເດືອນແລະທຸກປີ ແຕ່ມະນຸດບໍ່ໄດ້ເປັນເຊັ່ນນັ້ນ ເພາະວ່າພຣະເຈົ້າຊົງສ້າງມະນຸດໃຫ້ມີໃຈປາຖະໜາເພື່ອມະນຸດຈະສາມາດຕັດສິນໃຈເລືອກເໝືອນຢ່າງທີ່ພຣະເຈົ້າ ຊົງຕັດສິນພຣະໄທໃນການເລືອກໄດ້ ພຣະເຈົ້າຊົງປາຖະໜາທີ່ຈະສ້າງມະນຸດເພື່ອໃຫ້ມະນຸດເລືອກທີ່ຈະຮັກແລະເຊື່ອຟັງພຣະເຈົ້າ.



ພຣະອົງຊົງເປັນພຣະເຈົ້າຂອງມະນຸດທັງປວງແລະວັດທະນະທຳຕ່າງໆທັງສິ້ນ.

ບັນພະບຸລຸດຂອງເຮົາໄດ້ຫັນຈາກພຣະເຈົ້າເສຍແລະໄປຕິດຕາມຄວາມຄິດທີ່ຊາຕານໄດ້ໃສ່ໃຫ້ແກ່ພວກເຂົາ ມີກຸ່ມຄົນພຽງເລັກນ້ອຍເທົ່ານັ້ນທີ່ຍັງນະມັດສະການພຣະເຈົ້າຜູ້ທ່ຽງແທ້ຜູ້ຊົງພຣະຊົນຢູ່ ໃນຂະນະທີ່ຄົນສ່ວນໃຫຍ່ຫັນຈາກການຕິດຕາມພຣະອົງເສຍບັດນີ້ເມື່ອປະຊາຊາດກະຈັດກະຈາຍໄປທົ່ວແຜ່ນດິນໂລກແລ້ວທ່ານຄິດວ່າພຣະເຈົ້າຈະຊົງເລືອກໃຜໃຫ້ມາເລີ່ມຂະບວນການທີ່ຈະບອກກ່າວໃຫ້ປະຊາຊາດຕ່າງໆ ທົ່ວໂລກໄດ້ຮູ້ເຖິງ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ທີ່ຈະສະເດັດມານັ້ນ ຢ່າງໃດກໍຕາມ ແມ່ນຈະມີບັນຫາແລະອຸປະສັກຫຼວງຫຼາຍ ໃນທີ່ສຸດແລ້ວ “ພຣະຜູ້ຊ່ວຍໃຫ້ລອດພົ້ນ” ກໍຈະຖືກສົ່ງລົງມາເພື່ອປະຊາຊາດຕ່າງໆທົ່ວໂລກ ເຮົາຈະມາສຶກສາຄົ້ນຫາກັນອີກໃນບົດຮຽນຕໍ່ໄປ

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ່ 6 ໃນໜ້າ 70 *

*ເຂົາກໍເຊົາສ້າງເມືອງ ພວກເຂົາໄດ້ໃສ່ຊື່ເມືອງນີ້ວ່າບາບີໂລນ ເພາະໃນທີ່ນັ້ນພຣະຜູ້ເປັນເຈົ້າໄດ້ເຮັດໃຫ້ພາສາຂອງປະຊາຊົນທຸກຄົນປົນກັນແລະຈາກທີ່ນັ້ນພຣະອົງໄດ້ໃຫ້ເຂົາກະຈັດກະຈາຍກັນໄປທົ່ວເທິງແຜ່ນດິນໂລກ.*

ພຣະເຈົ້າຊົງບັນດານໃຫ້ພາສາຂອງພວກເຂົາຊຶ່ງໃນຂະນະນັ້ນມີຢູ່ພຽງພາສາດຽວວຸ້ນວາຍໄປໂດຍການກະທຳໃຫ້ມີພາສາໃໝ່ໆເກີດຂຶ້ນອີກຫຼວງຫຼາຍ ທັນໃດນັ້ນພວກເຂົາກໍບໍ່ສາມາດຈະເຂົ້າໃຈກັນແລະກັນໄດ້ ພວກເຂົາຈຶ່ງຖືກບັງຄັບໃຫ້ຢຸດການກໍ່ສ້າງໄປໂດຍປະລິຍາຍ ເພາະບໍ່ສາມາດຈະຕິດຕໍ່ສື່ສານກັນໄດ້ ການຂາດການຕິດຕໍ່ສື່ສານໄດ້ຂັດຂວາງບໍ່ໃຫ້ເກີດຄວາມສະໜິດສະໜົມກົມກຽວກັນໃນເມືອງນັ້ນ ດັ່ງນັ້ນພວກເຂົາຈຶ່ງໄປລວມຕົວກັນຕາມຄອບຄົວຂອງຕົນເອງແລະແຍກຈາກໄປໃນລັກສະນະຂອງການອົບພະຍົບເປັນກຸ່ມໃຫຍ່ໆ ບາງຜ່ອງກໍຍ່າງດ້ວຍຕີນບາງຜ່ອງກໍລົງເຮືອ ໂດຍໄດ້ກະຈັດກະຈາຍໄປທົ່ວໂລກ ແລະໃນຊ່ວງເວລາຂະນະທີ່ມີການອົບພະຍົບນັ້ນກໍມີການພັດທະນາລັກສະນະສະເພາະຂອງປະເທດຕ່າງໆຂຶ້ນ ນີ້ເປັນຈຸດເລີ່ມຕົ້ນທີ່ພາສາລວມທັງວັດທະນະທຳແລະປະເທດຊຶ່ງເປັນຜົນທີ່ເກີດຂຶ້ນພາຍຫຼັງໄດ້ຖືກກຳເນີດຂຶ້ນ ບັນພະບຸລຸດທຸກຄົນຂອງທ່ານຕ່າງກໍເຄີຍຢູ່ທີ່ຫໍບາເບນນຳກັນທັງສິ້ນ ແລະນີ້ຄືຈຸດເລີ່ມຕົ້ນຂອງປະຫວັດສາດແຫ່ງຄອບຄົວຂອງທ່ານຊຶ່ງເປັນສ່ວນໜຶ່ງຂອງລັກສະນະປະຊາຊາດຫຼືກຸ່ມພາສາແຕ່ລະກຸ່ມ ພຣະເຈົ້າຜູ້ຊົງສ້າງໂລກທັງໂລກ ຜູ້ຊົງສ້າງອາດາມແລະເອວາ ແລະຜູ້ຊົງບັນດານໃຫ້ເກີດນ້ຳຖ້ວມຄັ້ງໃຫຍ່ ກໍຊົງເປັນພຣະເຈົ້າອົງດຽວກັບທີ່ໄດ້ບັນດານໃຫ້ເກີດພາສາຕ່າງໆແລະວັດທະນະທຳທີ່ຍິ່ງໃຫຍ່ຂອງໂລກ



ໂດຍສະຫຼຸບແລ້ວ ພຣະເຈົ້າຊົງສ້າງມະນຸດໃຫ້ມີຈິດໃຈ ເພື່ອວ່າມະນຸດຈະສາມາດຟັງ ແລະເຂົ້າໃຈການຕິດຕໍ່ສື່ສານຈາກພຣະເຈົ້າໄດ້ ພຣະເຈົ້າຊົງສ້າງມະນຸດໃຫ້ມີອາລົມແລະຄວາມຮູ້ສຶກ ເພື່ອໃຫ້ມະນຸດສາມາດຕອບສະໜອງຕໍ່ພຣະເຈົ້າດ້ວຍຄວາມຮັກແລະການອຸທິດຕົນເອງ ພຣະເຈົ້າຊົງສ້າງມະນຸດໃຫ້ມີໃຈປາຖະໜາເພື່ອວ່າມະນຸດຈະສາມາດເລືອກທີ່ຈະຕິດຕາມພຣະເຈົ້າໄດ້ ມະນຸດບໍ່ເໝືອນກັບສິ່ງອື່ນໆທີ່ພຣະເຈົ້າຊົງສ້າງຂຶ້ນມາ ພຣະເຈົ້າຊົງອອກແບບມະນຸດມາເຊັ່ນນີ້ເພື່ອວ່າພຣະອົງ ຈະສາມາດມີຄວາມສຳພັນພິເສດກັບມະນຸດໄດ້ ພຣະເຈົ້າຊົງມີພຣະປະສົງທີ່ຈະໃຫ້ມະນຸດຄອບຄອງສິ່ງທີ່ພຣະອົງຊົງສ້າງຂຶ້ນ ພຣະເຈົ້າຊົງມີສິດທິອຳນາດສູງສຸດແຕ່ພຣະອົງຊົງປາຖະໜາໃຫ້ມະນຸດເປັນຜູ້ເບິ່ງແຍງສິ່ງທີ່ພຣະອົງຊົງເນລະມິດສ້າງໄວ້ນັ້ນ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ 1 ໃນໜ້າ 65 *

ເກີດຫຍັງຂຶ້ນກັບຊາຕານເມື່ອມັນໄດ້ກະບົດຂັດຂືນຕໍ່ພຣະເຈົ້າ ແມ່ນແລ້ວ! ມັນໄດ້ຫຼົງໄປຈາກທາງຂອງພຣະເຈົ້າ ເກີດຫຍັງຂຶ້ນກັບອາດາມແລະເອວາ ເມື່ອຄົນທັງສອງບໍ່ເຊື່ອຟັງພຣະເຈົ້າ ພວກເຂົາກໍຫຼົງຫາຍເຊັ່ນກັນ! ເກີດຫຍັງຂຶ້ນເມື່ອກາອິນປະຕິເສດທາງຂອງພຣະເຈົ້າ ລາວກໍຫຼົງຫາຍ! ເກີດຫຍັງຂຶ້ນເມື່ອມະນຸດໃນສະໄໝຂອງໂນອາກະບົດຂັດຂືນຕໍ່ພຣະເຈົ້າ ພວກເຂົາກໍຫຼົງຫາຍໄປຄືກັນ! ແລ້ວຝູງຊົນທີ່ກຳລັງສ້າງຫໍຄອຍເດ່ ທ່ານຄິດວ່າກຸ່ມຄົນເຫຼົ່ານີ້ຈະໄດ້ຮັບໄຊຊະນະຫຼືບໍ? ບໍ່ມີທາງດອກ!

*ປະຖົມມະການ 11:7 ສະນັ້ນເຮົາຕ້ອງລົງໄປເຮັດໃຫ້ພາສາຂອງເຂົາແຕກຕ່າງກັນເພື່ອວ່າພວກເຂົາຈະປາກເວົ້າບໍ່ເຂົ້າໃຈກັນ.*

ທີ່ຈິງແລ້ວປັນຫາບໍ່ໄດ້ຢູ່ທີ່ມະນຸດເວົ້າພາສາດຽວກັນແຕ່ຢູ່ທີ່ພວກເຂົາບໍ່ເຊື່ອຟັງພຣະເຈົ້າ ການທີ່ມະນຸດເວົ້າພາສາດຽວກັນຍ່ອມເປັນເລື່ອງງ່າຍທີ່ຈະເຮັດໃຫ້ການກະບົດຂັດຂືນຂະຫຍາຍຕົວອອກໄປຢ່າງວ່ອງໄວແລະການລວມຕົວກັນເພື່ອກໍ່ການກະບົດກໍງ່າຍຂຶ້ນດ້ວຍ ຊຶ່ງນີ້ເປັນລັກສະນະດຽວກັບສະຖານະການທີ່ໄດ້ເກີດຂຶ້ນໃນຄຸກຕ່າງໆໃນປະຈຸບັນ ກຸ່ມນັກໂທດຂັ້ນຊົ່ວທີ່ສຸດຈະຖືກນຳຕົວໄປແຍກຂັງໄວ້ໃນຄຸກດ່ຽວເພື່ອປ້ອງກັນບໍ່ໃຫ້ພຶດຕິກຳທີ່ຊົ່ວຮ້າຍກວ່າແພ່ກະຈາຍໄປສູ່ນັກໂທດທັງໝົດ ພຣະເຈົ້າຊົງຕັດສິນພຣະໄທທີ່ຈະບັນດານໃຫ້ພາສາຂອງພວກເຂົາສັບສົນວຸ້ນວາຍໄປ ກ່ອນທີ່ການກະບົດຂັດຂືນຈະລຸກລາມໃຫຍ່ໂຕຫຼາຍໄປກວ່ານີ້.

*ປະຖົມມະການ 11:8-9 ດັ່ງນັ້ນພຣະຜູ້ເປັນເຈົ້າຈິ່ງເຮັດໃຫ້ເຂົາພັດພາກຈາກກັນໄປຢູ່ທົ່ວທຸກຫົນທຸກແຫ່ງເທິງແຜ່ນດິນໂລກແລະພວກ*

ອາດຊະຍາກຳ, ການສໍ້ລາດບັງຫຼວງ, ການໄຮ້ສິນທຳ, ການບໍ່ເຊື່ອຟັງ ແລະອື່ນໆແລະນີ້ຄືຈຸດກຳເນີດສິ່ງຕ່າງໆເຫຼົ່ານີ້ໄດ້ເລີ່ມຕົ້ນຂຶ້ນພາຍຫຼັງນໍ້າຖ້ວມເທື່ອໃຫຍ່ນັ້ນ ທ່ານຄິດວ່າໃຜມີອິດທິພົນທີ່ສາມາດເຮັດໃຫ້ມະນຸດກະບົດຂັດຂືນຕໍ່ພຣະເຈົ້າໄດ້ເຖິງພຽງນີ້ ແນ່ນອນ! ມັນຄືຊາຕານນັ້ນເອງ ແລ້ວທ່ານຄິດວ່າເປັນຫຍັງຊາຕານຈຶ່ງຕ້ອງການທີ່ຈະເຮັດໃຫ້ມະນຸດກະບົດຂັດຂືນຕໍ່ພຣະເຈົ້າ ຄຳຕອບກໍຄືເພື່ອວ່າພຣະເຈົ້າຈະບໍ່ສາມາດທີ່ຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ເຂົ້າມາໃນໂລກໄດ້.

*ປະຖົມມະການ 11:5-6 ແລ້ວພຣະຜູ້ເປັນເຈົ້າກໍໄດ້ລົງມາເພື່ອເບິ່ງຕົວເມືອງກັບຫໍຄອຍທີ່ມະນຸດໄດ້ສ້າງຂຶ້ນແລະພຣະອົງກ່າວວ່າ "ບັດນີ້ມະນຸດທ້ອນໂຮມກັນເປັນພວກດຽວແລະຕ່າງກໍປາກເວົ້າພາສາດຽວກັນ ສິ່ງນີ້ເປັນພຽງຂັ້ນເລີ່ມຕົ້ນທີ່ເຂົາກຳລັງກະທຳ ໃນຂັ້ນຕໍ່ໄປເຂົາຈະສາມາດກະທຳທຸກສິ່ງທີ່ເຂົາປາຖະໜາຢາກກະທຳ!*

ພຣະເຈົ້າຊົງສິ້ນພຣະໄທໃນມະນຸດທີ່ກະບົດຂັດຂືນເຫຼົ່ານີ້ ພຣະອົງຊົງຮູ້ຄວາມຄິດຂອງພວກເຂົາແລະຊົງຮູ້ວ່າພວກເຂົາວາງແຜນຈະເຮັດຫຍັງ ພຣະອົງຊົງຮູ້ວ່າຖ້າມະນຸດຍັງເວົ້າພາສາດຽວກັນພວກເຂົາກໍຈະສ້າງບັນຫາຫຼາຍກວ່ານີ້ແລະຈະກະທຳຄວາມຊົ່ວເພີ່ມຫຼາຍຂຶ້ນດ້ວຍການກະບົດຂັດຂືນຫຼາຍກວ່ານີ້ອີກ ພຣະເຈົ້າຊົງຫ່ວງໃຍໃນສິ່ງທີ່ພວກເຂົາໄດ້ກະທຳລົງໄປ ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງຕະຫຼອດເວລາແລະຊົງຮອບຮູ້ທຸກສິ່ງສາລະພັດ ພຣະອົງຊົງຮູ້ທຸກສິ່ງກ່ຽວກັບຕົວເຮົາດ້ວຍ ເຮົາບໍ່ສາມາດຈະເກັບອັນໃດເປັນຄວາມລັບຈາກພຣະເຈົ້າໄດ້ເລີຍ ພຣະອົງຊົງຮູ້ທຸກສິ່ງທີ່ເຮົາໄດ້ຄິດໄດ້ເວົ້າ ແລະໄດ້ກະທຳລົງໄປ.



# ບົດທີ 2

# ມະນຸດຄົນທຳອິດ

ພຣະທຳປະຖົມມະການບົດທີ 1 ໄດ້ບອກໃຫ້ພວກເຮົາຮູ້ວ່າພຣະເຈົ້າຊົງສ້າງມະນຸດ ໃນຂະນະທີ່ບົດທີ 2 ນັ້ນ ອະທິບາຍວ່າພຣະເຈົ້າຊົງສ້າງມະນຸດຂຶ້ນມາໄດ້ແນວໃດ? ໃນບົດທີ 2 ຂໍ້ 4-6 ເປັນການທົບທວນເຫດການຕ່າງໆທີ່ໄດ້ເກີດຂຶ້ນໃນມື້ທີ່ 6 ກ່ອນທີ່ພຣະເຈົ້າຈະຊົງສ້າງມະນຸດ ພວກເຮົາໄດ້ຮັບການບອກເລົ່າໃຫ້ຮູ້ອີກຄັ້ງໜຶ່ງວ່າ ພຣະເຈົ້າຊົງຈັດຕຽມໂລກທີ່ສົມບູນໄວ້ໃຫ້ແກ່ສິ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະອົງຊົງສ້າງຂຶ້ນມາໄດ້ແນວໃດ.

*ປະຖົມມະການ 2:7 ແລ້ວພຣະເຈົ້າແຫ່ງຈັກກະວານກໍເອົາຂີ້ດິນຈາກພື້ນດິນມາປັ້ນເປັນຊາຍ ພຣະອົງເປົ່າລົມຫາຍໃຈໃສ່ຮູດັງຂອງຊາຍທີ່ກົກປັ້ນຂຶ້ນມານັ້ນໃຫ້ມີຊີວິດ ແລະຊາຍຜູ້ນັ້ນກໍໄດ້ເລີ່ມມີຊີວິດ.*

ປະການທຳອິດ ພຣະເຈົ້າຊົງສ້າງຮ່າງກາຍມະນຸດຂຶ້ນມາຈາກຂີ້ດິນ ຫຼັກການທາງວິທະຍາສາດໄດ້ພິສູດແລ້ວວ່າ ຂໍ້ຄວາມດັ່ງກ່າວເປັນຄວາມຈິງ, ແຮ່ທາດທີ່ປະກອບກັນຂຶ້ນມາເປັນຮ່າງກາຍມະນຸດສາມາດພົບໄດ້ໃນດິນນີ້ເອງ. ປະການທີສອງ ພຣະອົງຊົງເປົ່າລົມຫາຍໃຈເຂົ້າໄປໃນຮ່າງກາຍນີ້ ມະນຸດກາຍເປັນ "ວິນຍານ" ທີ່ມີຊີວິດ ມະນຸດເລີ່ມຕົ້ນດ້ວຍການມີຮ່າງກາຍ ແລ້ວພຣະເຈົ້າຊົງ

ບັນດານໃຫ້ຮ່າງກາຍນັ້ນມີຊີວິດໃນອີກບໍ່ດົນເຮົາຈະໄດ້ຮຽນຮູ້ຊື່ຂອງມະນຸດຄົນທຳອິດຄື **<u>ອາດາມ</u>**.

ເຮົາໄດ້ຮຽນຮູ້ແລ້ວວ່າ ພຣະເຈົ້າຊົງເປັນພຣະວິນຍານ ແລະມະນຸດໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ ດັ່ງນັ້ນມະນຸດຈຶ່ງເປັນວິນຍານຊຶ່ງອາໄສຢູ່ໃນຮ່າງກາຍທີ່ເປັນວັດຖຸ ວິນຍານເປັນບຸກຄະລິກລັກສະນະຂອງມະນຸດຊຶ່ງລວມໄປເຖິງການມີຈິດໃຈ, ອາລົມ, ຄວາມຮູ້ສຶກ ແລະມີໃຈປາຖະໜາທີ່ສາມາດຕັດສິນໃຈໄດ້ດ້ວຍຕົນເອງ ວິນຍານຈິດ ຕິດຕໍ່ກັບໂລກວັດຖຸໂດຍຜ່ານຮ່າງກາຍ, ຖ້າທ່ານລອງເອົາມືໄປວາງໃສ່ເຕົາໄຟຮ້ອນໆ ທ່ານກໍຈະຕ້ອງຫົດມືຂອງທ່ານກັບມາທັນທີ ເພາະເປັນປະຕິກິຍາຈາກຄວາມຮູ້ສຶກວ່າເຕົາໄຟນັ້ນຮ້ອນ ສິ່ງທີ່ເກີດຂຶ້ນກໍຄື ການທີ່ວິນຍານຈິດຂອງທ່ານຕິດຕໍ່ຫຼືສຳພັດກັບໂລກວັດຖຸໂດຍຜ່ານຮ່າງກາຍຂອງທ່ານນັ້ນເອງ ໃນທຳນອງດຽວກັນນີ້ ວິນຍານຈິດຂອງພວກເຮົາກໍຕິດຕໍ່ສຳພັດກັບພຣະເຈົ້າໂດຍຜ່ານທາງຈິດວິນຍານຂອງມະນຸດນັ້ນເອງ ພຣະເຈົ້າຊົງເປັນພຣະວິນຍານ ດັ່ງນັ້ນຜູ້ທີ່ປາຖະໜາຈະສາມັກຄີທຳກັບພຣະເຈົ້າກໍຈະຕ້ອງກະທຳໂດຍຜ່ານພຣະວິນຍານເທົ່ານັ້ນ.

ດວງອາທິດ, ດວງຈັນ, ດວງດາວຕ່າງໆ, ລົມແລະນ້ຳ ບໍ່ສາມາດບັນດານໃຫ້ມະນຸດມີຊີວິດໄດ້, ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດບັນດານໃຫ້ມະນຸດມີຊີວິດຂຶ້ນມາໄດ້ ເພາະສະນັ້ນພວກເຮົາທຸກຄົນຈຶ່ງໄດ້ຮັບຊີວິດຈາກພຣະເຈົ້າ.



*ປະຖົມມະການ 11: 3-4 ພວກເຂົາເວົ້າກັນວ່າ "ມາເທາະ! ຈົ່ງພາກັນປັ້ນດິນຈີ່ແລະເຜົາມັນໃຫ້ແຂງ" ດັ່ງນັ້ນພວກເຂົາຈຶ່ງມີດິນຈີ່ເພື່ອກໍ່ສ້າງ ແລະມີຢາງໃຊ້ຕາງປະທາຍເພື່ອຕິດດິນຈີ່ເຂົ້າກັນ ພວກເຂົາເວົ້າວ່າ "ບັດນີ້ຈົ່ງພາກັນສ້າງເມືອງໃຫ້ມີຍອດສູງຈຸຟ້າເພື່ອພວກເຮົາຈະໄດ້ສ້າງຊື່ສຽງໄວ້ແລະຈະບໍ່ພັດພາກຈາກກັນໄປທົ່ວເທິງແຜ່ນດິນໂລກນີ້".*



ມະນຸດໄດ້ລວມຕົວກັນເພື່ອຈະສ້າງຫໍບາເບນເພາະພວກເຂົາບໍ່ຢາກຈະກະຈັດກະຈາຍໄປທົ່ວແຜ່ນດິນໂລກ ມະນຸດຈິງໃຈທີ່ຈະບໍ່ເຊື່ອຟັງພຣະບັນຊາທີ່ພຣະເຈົ້າໄດ້ຕັດສັ່ງໄວ້ແກ່ໂນອາ ຄົນເຫຼົ່ານີ້ຄິດເຖິງແຕ່ຕົນເອງເທົ່ານັ້ນ ພວກເຂົາເຕັມໄປດ້ວຍຄວາມຈອງຫອງແລະສົນໃຈແຕ່ຈະຍົກຍ້ອງເຊີດຊູຊື່ສຽງຂອງຕົນເອງ, ເປັນຫຍັງພວກເຂົາຈຶ່ງໂງ່ຈ້າເຊັ່ນນີ້ ບັນພະບຸລຸດຂອງພວກເຂົາຕ້ອງຕາຍໃນນ້ຳຖ້ວມທັງໝົດ ແຕ່ພວກເຂົາກັບບໍ່ໄດ້ຮຽນຮູ້ຂໍ້ຜິດພາດຂອງຄົນເຫຼົ່ານັ້ນເລີຍແມ່ນແຕ່ໜ້ອຍ ເມືອງທັງເມືອງມີປະຊາກອນທົ່ວທັງແຜ່ນດິນໂລກມາລວມຕົວກັນເພື່ອຈະເຮັດການກະບົດຂັດຂືນຕໍ່ພຣະເຈົ້າປະຈຸບັນນີ້ເມືອງຕ່າງໆ ໃນໂລກມີບັນຫາໃຫຍ່ເກີດຂຶ້ນຫຼວງຫຼາຍ ທັງ

ຊາຕານໄດ້ຊັກນຳບັນພະບຸລຸດຂອງເຮົາໃຫ້ກະບົດຂັດຂືນຕໍ່ພຣະເຈົ້າ ມັນຕ້ອງການໃຫ້ມະນຸດນະມັດສະການພຣະເຈົ້າຫຼາຍທັງຫຼາຍນັ້ນ ໃນປະຈຸບັນຊຸມຊົນຫຼາຍແຫ່ງຍັງນະມັດສະການດວງອາທິດ, ດວງຈັນແລະດວງດາວຕ່າງໆຫຼືແມ່ນແຕ່ສັດນາໆຊະນິດ. ຊາຕານຮູ້ຈຸດອ່ອນຂອງວັດທະນະທຳແຕ່ລະແຫ່ງແລະຍັງຮູ້ວ່າຈະຕ້ອງຕົວະຢ່າງໃດຈຶ່ງຈະເປັນທີ່ຍອມຮັບໄດ້ຕາມສະພາບຂອງວັດທະນະທຳນັ້ນໆ. ການນະມັດສະການກ່ຽວຂ້ອງກັບການທຸ້ມເທຄວາມຄິດ ຈິດໃຈແລະຊັບພະຍາກອນຫຼືສິ່ງທີ່ເຮົາມີຢູ່ເພື່ອຈະບົວລະບັດຮັບໃຊ້ວັດຖຸຫຼືສິ່ງທີ່ເຮົານະມັດການນັ້ນ ຄຳວ່າ **“<u>ນະມັດສະການ</u>”** ມາຈາກຄຳວ່າ **“<u>ມີຄຸນຄ່າ</u>”** ພຣະເຈົ້າແລະມີພຽງພຣະເຈົ້າແຕ່ພຽງຜູ້ດຽວເທົ່ານັ້ນທີ່ມີຄຸນຄ່າສົມຄວນທີ່ຈະໄດ້ຮັບການນະມັດສະການແລະເທີດທູນບູຊາຈາກເຮົາ ຊາຕານບໍ່ສົນໃຈວ່າເຮົາຈະນະມັດສະການຫຍັງຕາບເທົ່າທີ່ເຮົາບໍ່ໄດ້ນະມັດສະການພຣະເຈົ້າທ່ຽງແທ້ຜູ້ຊົງພຣະຊົນຢູ່ແຕ່ພຽງຜູ້ດຽວ.

*ປະຖົມມະການ 11:1-2 ແຕ່ທຳອິດນັ້ນມະນຸດທົ່ວທັງໂລກປາກເວົ້າພາສາດຽວກັນແລະໃຊ້ຖ້ອຍຄຳແບບດຽວກັນ, ເມື່ອເຂົາຍົກຍ້າຍໄປທາງທິດຕາເວັນອອກຈຶ່ງພົບທົ່ງຮາບພຽງແຫ່ງໜຶ່ງທີ່ບາບີໂລເນຍແລະພາກັນຕັ້ງກຸ່ມກອນຢູ່ທີ່ນັ້ນ.*

ຂະນະນັ້ນທົ່ວທັງໂລກມີພາສາພຽງພາສາດຽວ ເຮົາບໍ່ຮູ້ວ່າມະນຸດມີຈຳນວນເທົ່າໃດເທິງແຜ່ນດິນໂລກໃນເວລານັ້ນ ແຕ່ພວກເຂົາທຸກຄົນອາໄສຢູ່ເທິງທົ່ງຮາບໃນແຜ່ນດິນຊີນາ ຊຶ່ງກໍຄືປະເທດອີຣັກໃນປະຈຸບັນນັ້ນເອງ.



*ປະຖົມມະການ 2:15-17 ແລ້ວພຣະເຈົ້າແຫ່ງຈັກກະວານກໍເອົາຊາຍຜູ້ທີ່ພຣະອົງໄດ້ສ້າງມານັ້ນໄປເຝົ້າຮັກສາແລະເບິ່ງແຍງສວນ. ພຣະອົງສັ່ງລາວວ່າ “ໝາກໄມ້ທຸກກົກໃນສວນນີ້ເຈົ້າກິນໄດ້ ເວັ້ນໄວ້ແຕ່ຕົ້ນທີ່ໃຫ້ຮູ້ຈັກດີແລະຮູ້ຈັກຊົ່ວ ເຈົ້າຢ່າກິນໝາກໄມ້ໃນຕົ້ນນັ້ນ ຖ້າເຈົ້າຂືນກິນເມື່ອໃດເຈົ້າຈະຕາຍເມື່ອນັ້ນ”.*



ປະການທຳອິດ ເຮົາໄດ້ຮຽນຮູ້ວ່າ ພຣະເຈົ້າຕິດຕໍ່ສື່ສານກັບມະນຸດ ພຣະເຈົ້າໄດ້ສັ່ງອາດາມໃຫ້ມີໜ້າທີ່ທີ່ຕ້ອງຮັບຜິດຊອບ ປະການທີສອງ ເນື່ອງຈາກພຣະເຈົ້າຊົງເປັນເຈົ້າຂອງທຸກສິ່ງສາລະພັດພຣະອົງຈຶ່ງມີລິດອຳນາດແລະຄວາມຊອບທຳທີ່ສາມາດຈຳກັດຂອບເຂດໃຫ້ແກ່ສິ່ງທີ່ພຣະອົງຊົງສ້າງມາ. ມີຕົ້ນໄມ້ຈັກຕົ້ນທີ່ອາດາມສາມາດນຳມາເປັນອາຫານໄດ້? ຄຳຕອບກໍຄື ຕົ້ນໄມ້ຕົ້ນອື່ນໆທຸກຕົ້ນລວມທັງຕົ້ນໄມ້ແຫ່ງຊີວິດດ້ວຍ ນີ້ເປັນເລື່ອງທີ່ເປັນທຳຫຼືປະຕິບັດຕາມບໍ່ຍາກເລີຍ ພຣະເຈົ້າຊົງບອກໃຫ້ອາດາມສະແດງອອກເຖິງການເຊື່ອຟັງໂດຍການບໍ່ກິນໝາກໄມ້ຢູ່ໃນຕົ້ນໄມ້ພຽງຕົ້ນດຽວເທົ່ານັ້ນ.

ພຣະເຈົ້າສັ່ງວ່າ ໂທດສຳລັບການບໍ່ເຊື່ອຟັງນັ້ນຄືຄວາມຕາຍ ພຣະເຈົ້າຊົງບອກອາດາມວ່າ ຖ້າລາວກິນໝາກໄມ້ຈາກຕົ້ນໄມ້ນັ້ນ ລາວຈະຕ້ອງຕາຍຢ່າງແນ່ນອນ, ຄວາມຕາຍໝາຍເຖິງການແຍກອອກຈາກກັນ. ປະການທຳອິດ ລາວຈະຕ້ອງຖືກແຍກຈາກການມີຄວາມສຳພັນກັບພຣະເຈົ້າ, ປະການທີສອງ ລາວຈະຕ້ອງຕາຍຝ່າຍຮ່າງກາຍໃນທີ່ສຸດ. ລອງສຳນຶກເບິ່ງກິ່ງໄມ້ທີ່ຫັກແຍກອອກຈາກຕົ້ນ ກິ່ງໄມ້ນັ້ນແຫ່ວແຫ້ງລົງແລະຕາຍໃນທັນທີບໍ? ບໍ່ເລີຍ ໃບຂອງມັນຍັງຄົງຂຽວຢູ່ສອງສາມວັນ ແຕ່ກິ່ງໄມ້ນັ້ນຄົງຕາຍໄປແລ້ວ ເພາະວ່າກິ່ງໄມ້ນັ້ນບໍ່ສາມາດໄດ້ຮັບສິ່ງທີ່ຈຳເປັນໃນການຫຼໍ່ລ້ຽງຮ່າງກາຍເພື່ອໃຫ້ມີຊີວິດຢູ່ຕໍ່ໄປໄດ້ ເພາະວ່າມັນໄດ້ຖືກຫັກແຍກອອກຈາກຕົ້ນແລ້ວ.

ຖ້າອາດາມກິນໝາກໄມ້ຈາກຕົ້ນໄມ້ທີ່ພຣະເຈົ້າຊົງຫ້າມນັ້ນ ລາວຈະຖືກຕັດຂາດຈາກພຣະເຈົ້າ ຊຶ່ງແມ່ນແຫຼ່ງຊີວິດຊຶ່ງພຣະເຈົ້າເປັນຜູ້ປະທານຊີວິດແລະເປັນຜູ້ປົກປັກຮັກສາຊີວິດຂອງລາວໄວ້ ຜົນກໍຄື ລາວຈະຕ້ອງຕາຍຝ່າຍຮ່າງກາຍໃນວັນໃດວັນໜຶ່ງ ເໝືອນຢ່າງກິ່ງໄມ້ທີ່ແຍກອອກຈາກຕົ້ນຂອງມັນ ມັນຈະແຫ່ວແຫ້ງແລະຕາຍໄປ; ປະການທີສາມ ຄວາມຕາຍແບບນີ້ໝາຍເຖິງ ການແຍກອອກຈາກພຣະເຈົ້າຕະຫຼອດນິລັນດອນ ເມື່ອຮ່າງກາຍບໍ່ມີຊີວິດແລ້ວ ສ່ວນທີ່ເປັນຈິດວິນຍານຂອງມະນຸດກໍແຍກອອກຈາກຮ່າງກາຍແລະໄປສູ່ສະຖານທີ່ເປັນຕາຢ້ານ ຊຶ່ງເອີ້ນວ່າ "ນະຣົກ" ນີ້ຄືຄວາມຕາຍຝ່າຍ ຈິດວິນຍານ.

ພຣະເຈົ້າຊົງໝາຍຄວາມວ່າແນວໃດ ສຳລັບຄວາມຕາຍຊະນິດນີ້ ພຣະເຈົ້າໝາຍຄວາມວ່າ ອາດາມຈະຕ້ອງຖືກແຍກຈາກການ



# ບົດທີ 6

# ຫໍບາເບນ

ທ່ານເຄີຍຄິດສົງໄສບໍ່ວ່າ ເປັນຫຍັງຈຶ່ງມີພາສາຕ່າງໆຫຼວງຫຼາຍໃນໂລກ? ຫຼືເຄີຍສົງໄສບໍ່ວ່າ ປະເທດຕ່າງໆໃນໂລກມາຈາກໃສ? ແທ້ຈິງພຣະເຈົ້າໄດ້ສັ່ງບອກແກ່ເຮົາແລ້ວວ່າສິ່ງຕ່າງໆເຫຼົ່ານີ້ເກີດຂຶ້ນໄດ້ຢ່າງໃດ ນອກຈາກນີ້ພຣະອົງຍັງໄດ້ຊົງບັນທຶກເລື່ອງລາວເຫຼົ່ານີ້ໄວ້ໃນພຣະຄຳພີເພື່ອເຮົາຈະສາມາດຮູ້ຄຳຕອບໄດ້ຢ່າງຊັດເຈນ.

ຫຼາຍປີຜ່ານໄປນັບຕັ້ງແຕ່ເຫດການທີ່ພຣະເຈົ້າໄດ້ຊົງຊ່ວຍໂນອາ ພັນລະຍາຂອງໂນອາ ບຸດຊາຍທັງ 3 ຄົນແລະພັນລະຍາຂອງບຸດຊາຍ ໃຫ້ພົ້ນຈາກນ້ຳຖ້ວມຄັ້ງໃຫຍ່ນັ້ນ ມະນຸດກໍທະວີຫຼາຍຂຶ້ນເທິງແຜ່ນດິນໂລກອີກ ລູກຫຼານສ່ວນໃຫຍ່ຂອງໂນອາພາກັນລືມການພິພາກສາຢ່າງຮຸນແຮງຂອງພຣະເຈົ້າໃນເທື່ອນັ້ນເສຍ ພວກເຂົາຈິງໃຈທີ່ຈະເພີກເສີຍຕໍ່ພຣະເຈົ້າແລະບໍ່ປາຖະໜາທີ່ຈະເຊື່ອພຣະອົງເໝືອນຢ່າງທີ່ອາເບັນ ເຊດແລະໂນອາ ໄດ້ເຊື່ອນັ້ນ ພວກເຂົາພາກັນຄິດເໝືອນຊາຕານ ມະນຸດຢາກຈະເປັນໃຫຍ່ແລະຍົກຍ້ອງເຊີດຊູຕົນເອງ ພວກເຂົາບໍ່ໃສ່ໃຈທີ່ຈະຮູ້ຈັກນະມັດການແລະໄວ້ວາງໃຈພຣະເຈົ້າ ແທນທີ່ຈະເຮັດຢ່າງນັ້ນພວກເຂົາພັດເຮັດຮູບຈຳລອງຂອງມະນຸດ, ສັດ, ນົກ ແລະງູ ແລ້ວນະມັດການສິ່ງເຫຼົ່ານີ້ແທນພຣະເຈົ້າ.

ມີຄວາມສຳພັນກັບພຣະເຈົ້າ ຜົນທີ່ເກີດຂຶ້ນກໍຄືຮ່າງກາຍຂອງລາວຈະຕ້ອງຕາຍໃນທີ່ສຸດແລະຈິດວິນຍານຂອງລາວຈະຕ້ອງຖືກແຍກອອກຈາກພຣະເຈົ້າ ໃຫ້ໄປຢູ່ໃນນະຮົກຕະຫຼອດໄປເປັນນິດ ພຣະເຈົ້າຊົງສັ່ງອາດາມໄວ້ຢ່າງຊັດເຈນໃນສິ່ງທີ່ລາວຈະຕ້ອງບໍ່ເຮັດ ບໍ່ດັ່ງນັ້ນລາວຈະຕ້ອງຕາຍຢ່າງແນ່ນອນ.

*ປະຖົມມະການ2:20 ສະນັ້ນຊາຍຜູ້ນີ້ຈຶ່ງຕັ້ງຊື່ໃຫ້ນົກ,ໃຫ້ສັດລ້ຽງແລະໃຫ້ສັດປ່າທັງໝົດ;ແຕ່ບໍ່ມີສັດໂຕໃດເລີຍເປັນຜູ້ຊ່ວຍຊູທີ່ເໝາະສົມແກ່ລາວ.*

ໃນຈຸດນີ້ເຮົາໄດ້ຮຽນຮູ້ວ່າຊື່ຂອງມະນຸດຄົນທຳອິດ ຄື ອາດາມ ການເນລະມິດສ້າງຂອງພຣະເຈົ້ານັ້ນບໍ່ໄດ້ຢຸດຢູ່ພຽງແຕ່ການສ້າງອາດາມ ສິ່ງທີ່ພຣະເຈົ້າເນລະມິດສ້າງເປັນສິ່ງສຸດທ້າຍນັ້ນຄືການສ້າງຜູ້ຍິງສຳລັບອາດາມ ພຣະເຈົ້າຊົງເຮັດໃຫ້ອາດາມນອນຫຼັບສະໜິດແລະໃນຂະນະທີ່ລາວນອນຢູ່ນັ້ນ ພຣະເຈົ້າກໍເອົາກະດູກຂ້າງຊີກໜຶ່ງຂອງລາວອອກມາແລະເຮັດໃຫ້ເນື້ອໜັງຈອດຕິດກັນດັ່ງເດີມແລະໄດ້ສ້າງຜູ້ຍິງຈາກກະດູກຂ້າງຊີກນັ້ນໃຫ້ແກ່ລາວ.

*ປະຖົມມະການ 2:23-24 ແລ້ວຊາຍຜູ້ນັ້ນກໍເວົ້າວ່າ "ໃນທີ່ສຸດ ນີ້ເດ່ແມ່ນຜູ້ທີ່ມີຮູບຮ່າງຄືເຮົາ; ກະດູກຂອງນາງມາຈາກກະດູກຂອງເຮົາເນື້ອໜັງຂອງນາງມາຈາກເນື້ອໜັງຂອງເຮົາ; ຜູ້ຍິງແມ່ນຊື່ຂອງນາງເພາະວ່າຜູ້ຍິງອອກມາຈາກຜູ້ຊາຍ". ດ້ວຍເຫດນີ້ ຜູ້ຊາຍຈຶ່ງຈາກພໍ່ແມ່ແລະໄປຕິດພັນຢູ່ກັບເມຍຂອງຕົນ ແລະເຂົາທັງສອງກໍກາຍເປັນໜຶ່ງ.*

ຖ້ອຍຄຳເຫຼົ່ານີ້ເປັນຖ້ອຍຄຳທຳອິດຂອງມະນຸດທີ່ໄດ້ມີການບັນທຶກໄວ້ແລະເປັນຖ້ອຍຄຳທີ່ກ່າວເຖິງຄວາມປິຕິຍິນດີໃນຄວາມສຳພັນທີ່ເກີດຈາກການແຕ່ງງານ ຂໍ້ແທ້ຈິງທີ່ວ່າຜູ້ຊາຍຕ້ອງການຜູ້ຍິງນັ້ນເປັນເລື່ອງສຳຄັນໃນການທີ່ຈະເຂົ້າໃຈຄວາມສຳຄັນຂອງຜູ້ຍິງ. ດັ່ງນັ້ນການແຕ່ງງານກັບເພດກົງກັນຂ້າມຈຶ່ງຖືເປັນພື້ນຖານຂອງຄອບຄົວແລະຂອງສັງຄົມທຸກແຫ່ງທີ່ຖືກຕ້ອງຕາມຮີດຄອງ ອາດາມໄດ້ຕັ້ງຊື່ໃຫ້ເມຍຂອງລາວວ່າ **<u>ເອວາ</u>**.

*ປະຖົມມະການ 2:25 "ຊາຍແລະຍິງໄດ້ເປືອຍກາຍຢູ່ ແຕ່ເຂົາບໍ່ຮູ້ສຶກລະອາຍກັນເລີຍ".*



ຜູ້ຊາຍກັບຜູ້ຍິງ ທັງສອງຕ່າງກໍເປືອຍກາຍໂດຍບໍ່ຮູ້ສຶກມີຄວາມລະອາຍຫຼືມີຄວາມເຄືອງໃຈເລີຍ ຖ້າເຫດການນັ້ນມາເກີດຂຶ້ນໃນປະຈຸບັນນີ້ກໍເປັນເລື່ອງທີ່ໜ້າຕົກໃຈແລະໜ້າອັບອາຍທີ່ສຸດໃນບົດຕໍ່ໄປພວກເຮົາຈະເຫັນວ່າ ເປັນຫຍັງສະຖານະການແນວນີ້ຈຶ່ງບໍ່ສາມາດເກີດຂຶ້ນໃນປະຈຸບັນ ມີບາງສິ່ງໄດ້ເກີດກັບໂລກມະຫັດສະຈັນທີ່ພຣະເຈົ້າໄດ້ສ້າງຂຶ້ນມາ.



*ໄປທີ່ເຮົາໄດ້ໃຫ້ໄວ້ກັບພວກເຈົ້າແລະສັດທັງຫຼາຍ ເຮົາຈະຕັ້ງຮຸ້ງກິນນໍ້າເປັນເຄື່ອງໝາຍຂອງຄຳໝັ້ນສັນຍາທີ່ເຮົາໄດ້ຕັ້ງໄວ້ກັບໂລກ. ເມື່ອໃດເຮົາເຮັດໃຫ້ເມກປົກຄຸມທົ່ວທ້ອງຟ້າແລະໃຫ້ຮຸ້ງປາກົດຂຶ້ນ; ເມື່ອນັ້ນເຮົາກໍຈະນຶກເຖິງຄຳໝັ້ນສັນຍາທີ່ເຮົາໃຫ້ແກ່ເຈົ້າແລະສັດທັງປວງວ່າເຮົາຈະບໍ່ທຳລາຍທຸກສິ່ງທີ່ມີຊີວິດດ້ວຍນໍ້າອີກ.*



ຮຸ້ງກິນນ້ຳເປັນສິ່ງທີ່ພຣະເຈົ້າຊົງປະທານແກ່ມະນຸດເພື່ອເປັນໝາຍສຳຄັນຂອງພຣະອົງທີ່ສະແດງວ່າພຣະອົງຈະບໍ່ທຳລາຍແຜ່ນດິນໂລກທັງໝົດດ້ວຍນ້ຳຖ້ວມອີກ ຫຼາຍພັນປີຫຼັງຈາກນ້ຳຖ້ວມຄັ້ງໃຫຍ່ຜ່ານໄປພຣະເຈົ້າກໍຍັງຄົງຮັກສາຄຳສັນຍາຂອງພຣະອົງຢູ່ສະເໝີ ດັ່ງນັ້ນ ເມື່ອທ່ານເຫັນຮຸ້ງກິນນ້ຳ ຈົ່ງສຳນຶກໄວ້ເຖິດວ່າພຣະເຈົ້າຊົງປະທານຮຸ້ງກິນນ້ຳນັ້ນເພື່ອເປັນໝາຍສຳຄັນວ່າພະອົງຈະບໍ່ທຳລາຍໂລກດ້ວຍນ້ຳຖ້ວມອີກ ແລະເຮົາກໍສາມາດໄວ້ວາງໃຈພຣະອົງໄດ້.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ 5 ໃນໜ້າ 69 *

ເຈົ້າໄດ້ເຮັດໃຫ້ມີລົມພັດເອົາຟອງນ້ຳໄປແລະເຮັດໃຫ້ລະດັບນ້ຳຕາມບ່ອນຕ່າງໆລົດລົງ ນາວາກໍມາຄ້າງຢູ່ພູອາລາລັດ ປະຈຸບັນພູເຂົາເຫຼົ່ານີ້ຢູ່ໃນປະເທດຕຸລາກີຕາມແນວຊາຍແດນທີ່ຕິດກັບປະເທດອານເມເນຍແລະຈໍເຈຍ.

ນ້ຳຢູ່ເທິງແຜ່ນດິນໂລກກໍໃຊ້ເວລາດົນນານເຖິງ 6 ເດືອນຈຶ່ງແຫ້ງສະໜິດ ຂໍ້ພຣະຄຳພີອີກ 2-3 ຂໍ້ຕໍ່ມາໄດ້ອະທິບາຍເຖິງການເປີດນາວາແລະການຂົນຍ້າຍສິ່ງຂອງຕ່າງໆອອກຈາກນາວາທັງສັດຕ່າງໆແລະມະນຸດໄດ້ເຂົ້າສູ່ໂລກໃໝ່ອີກຄັ້ງໜຶ່ງ ນີ້ຄົງຈະແມ່ນໂລກທີ່ແຕກຕ່າງຈາກໂລກທີ່ພວກເຂົາໄດ້ຈາກມາຢ່າງສິ້ນເຊີງ ພວກເຂົາຈະບໍ່ໄດ້ເຫັນເພື່ອນບ້ານ, ບ້ານເຮືອນຫຼືເມືອງໃດໆ ຊຶ່ງຄົງເປັນໂລກທີ່ງຽບຫຼາຍເພາະມີມະນຸດຢູ່ພຽງ 8 ຄົນແລະສັດອີກບໍ່ເທົ່າໃດໂຕເທົ່ານັ້ນທີ່ອາໄສຢູ່ເທິງໂລກ.

ພຣະເຈົ້າຊົງໃຫ້ໂນອາແລະລູກຊາຍຂອງເພິ່ນຄື: ເຊມ, ຮາມ ແລະຢາເຟດ ຄອບຄອງຝູງສັດຝູງນົກແລະປາເໝືອນທີ່ພຣະອົງຊົງປະທານສິ່ງເຫຼົ່ານີ້ແກ່ອາດາມໃນສວນເອເດນມາແລ້ວ ໂລກແລະສິ່ງສາລະພັດທຸກສິ່ງຊຶ່ງຢູ່ໃນໂລກນັ້ນເປັນຂອງພຣະເຈົ້າ ແຕ່ພຣະອົງໄດ້ຊົງປະທານແກ່ມະນຸດໃຫ້ຈັດການເບິ່ງແຍງສິ່ງຕ່າງໆເຫຼົ່ານີ້ແທນພຣະອົງ.

*ປະຖົມມະການ 9:11-15 ດ້ວຍຖ້ອຍຄຳດັ່ງຕໍ່ໄປນີ້ ເຮົາຈຶ່ງຕັ້ງຄຳໝັ້ນສັນຍາກັບເຈົ້າຄື: ເຮົາສັນຍາວ່າຈະບໍ່ທຳລາຍສິ່ງທີ່ມີຊີວິດດ້ວຍນ້ຳຖ້ວມອີກຈັກເທື່ອ ເພື່ອເປັນເຄື່ອງໝາຍຂອງຄຳໝັ້ນສັນຍາຕະຫຼອດ*



# ສິງຄາມໃນສະຫວັນ

ເຮົາຮຽນຮູ້ໄດ້ຈາກສ່ວນຕ່າງໆໃນພຣະຄຳພີວ່າ ພຣະເຈົ້າຊົງສ້າງອານາຈັກຂອງຝ່າຍຈິດວິນຍານ ກ່ອນທີ່ພຣະເຈົ້າຈະເນລະມິດສ້າງຈັກກະວານທີ່ເປັນວັດຖຸພາຍໃນ 6 ວັນ ພຣະເຈົ້າຊຶ່ງເປັນພຣະວິນຍານໄດ້ຊົງສ້າງວິນຍານອື່ນໆທີ່ເອີ້ນວ່າ **ເທວະດາ** ອີກເປັນຈຳນວນຫຼວງຫຼາຍ ເທວະດາເຫຼົ່ານີ້ ບໍ່ມີຮ່າງກາຍທີ່ເປັນວັດຖຸເໝືອນມະນຸດ, ດັ່ງນັ້ນເທວະດາເຫຼົ່ານີ້ຈຶ່ງບໍ່ມີຄວາມຕ້ອງການທາງດ້ານຮ່າງກາຍຢ່າງທີ່ມະນຸດຕ້ອງການ ເຊັ່ນ: ຄວາມຫິວ, ການຕ້ອງການນ້ຳ, ການຫຼັບນອນແລະອື່ນໆເປັນຕົ້ນ. ເທວະດາເຫຼົ່ານີ້ສາມາດໄປທີ່ໃດກໍໄດ້ຕາມຄວາມຕ້ອງການຂອງພວກເຂົາ ຈຳນວນເທວະດາທີ່ພຣະເຈົ້າສ້າງນັ້ນກໍມີເປັນຈຳນວນຫຼວງຫຼາຍ ເຮົາຮຽນຮູ້ຈາກພຣະຄຳພີວ່າເທວະດານັ້ນມີລິດອຳນາດຫຼາຍ.

ພຣະເຈົ້າຊົງສ້າງເທວະດາ ເພື່ອໃຫ້ຢູ່ກັບພຣະອົງ ໃຫ້ຮັກພຣະອົງ ໃຫ້ສັນລະເສີນແລະບົວລະບັດຮັບໃຊ້ພຣະອົງ ສະຫວັນເປັນສະຖານທີ່ທີ່ພິເສດຊຶ່ງເປັນບ່ອນຢູ່ຂອງພຣະເຈົ້າແລະເທວະດາ ພຣະເຈົ້າບໍ່ໄດ້ສ້າງເທວະດາໃຫ້ເໝືອນກັນທັງໝົດ ເທວະດາບາງຕົນກໍງາມແລະສະຫຼາດກວ່າເທວະດາອື່ນໆ ພຣະຄຳພີໄດ້ບອກໃຫ້ພວກເຮົາຮູ້ວ່າ ເມື່ອພຣະເຈົ້າຊົງສ້າງເທວະດານັ້ນ **"ລູຊີເຟີ"** ເປັນເທວະດາທີ່ງົດງາມທີ່ສຸດມີອຳນາດຫຼາຍທີ່ສຸດແລະສະຫຼາດທີ່ສຸດໃນທ່າມກາງພວກເທວະດາທັງຫຼາຍ ລູຊີເຟີ ເໜືອກວ່າເທວະດາອື່ນໆທັງໝົດທັງໃນດ້ານຄວາມຮູ້ແລະສະຕິປັນຍາ, ໃນດ້ານສິດທິອຳນາດແລະລິດອຳນາດ ເບິ່ງຄືວ່າງານຂອງລູຊີເຟີນັ້ນເຮັດໃຫ້ມັນຕ້ອງຢູ່

ເບື້ອງພຣະພັກພຣະເຈົ້າຕະຫຼອດເວລາ ເທວະດາທັງໝົດຕ່າງກໍເຝົ້າເບິ່ງແລະຊື່ນຊົມຍິນດີຂະນະທີ່ພຣະເຈົ້າຊົງເນລະມິດສ້າງຈັກກະວານລວມທັງແຜ່ນດິນໂລກພາຍໃນ 6 ວັນ.

ເມື່ອເຖິງເວລາໜຶ່ງ ຫຼັງຈາກທີ່ພຣະເຈົ້າໃຫ້ອາດາມແລະເອວາຢູ່ໃນສວນເອເດນ ລູຊີເຟີເກີດຍິ່ງຈອງຫອງໃນຄວາມງາມ, ສະຕິປັນຍາແລະຖານະຂອງຕົນ, ມັນຮູ້ສຶກອິດສາພຣະເຈົ້າທີ່ຊົງໄດ້ຮັບພຣະກຽດຕິຍົດທຸກຢ່າງ ມັນຈຶ່ງຊັກຊວນເທວະດາຈຳນວນໜຶ່ງໃນສາມໃຫ້ຮ່ວມກໍ່ການກະບົດກັບມັນແລະເຮັດສົງຄາມກັບພຣະເຈົ້າເພື່ອຈະຄອບຄອງຕຳແໜ່ງຂອງພຣະເຈົ້າ ໃນຖານະຜູ້ຄອບຄອງເໜືອສິ່ງສາລະພັດທັງປວງ ແຕ່ພຣະເຈົ້າຜູ້ຊົງຊາບຮູ້ເຫດການທຸກຢ່າງແລະຊົງຮອບຮູ້ທຸກສິ່ງສາລະພັດໄດ້ປົດເທວະດາເຫຼົ່ານີ້ອອກຈາກຕຳແໜ່ງຜູ້ປະຕິບັດຮັບໃຊ້ພຣະອົງ ແລະຖິ້ມພວກມັນລົງມາຍັງແຜ່ນດິນໂລກ ຊື່ຂອງ ລູຊີເຟີໄດ້ຖືກປ່ຽນເປັນ "ຊາຕານ" ແລະທຸກມື້ນີ້ມີຫຼາຍຄົນເອີ້ນມັນວ່າ: **"ພະຍານາກ"** ເຫຼົ່າເທວະດາທີ່ຍອມຕິດຕາມຊາຕານ ກໍກາຍເປັນເທວະດາທີ່ຊົ່ວຮ້າຍແລະຖືກເອີ້ນວ່າ: "ຜີປີສາດ". ໃນປະຈຸບັນພຣະເຈົ້າໄດ້ສ້າງສະຖານທີ່ສະເພາະແຫ່ງໜຶ່ງທີ່ເອີ້ນວ່າ: **"ນະຣົກ"** ຊຶ່ງແມ່ນຈຸດໝາຍປາຍທາງສຸດທ້າຍສຳຫຼັບຊາຕານແລະພວກຜີປີສາດນັ້ນ ໃນບໍ່ຊ້າພວກມັນຈະໄດ້ມາຢູ່ໃນສະຖານທີ່ນີ້ຊຶ່ງເປັນສະຖານທີ່ທີ່ໜ້າຢ້ານ ຄືເປັນບຶງໄຟທີ່ບໍ່ຮູ້ມອດຕະຫຼອດໄປເປັນນິດ ແຕ່ໃນຂະນະນີ້ພວກມັນຍັງອາໄສຢູ່ໃນອານາຈັກແຫ່ງຈິດວິນຍານໃນໂລກນີ້.

ຊາຕານຕໍ່ສູ້ກັບພຣະເຈົ້າໃນແຜ່ນດິນໂລກນີ້ຊາຕານແລະພວກຜີປີສາດມັນໄດ້ກຽດຊັງພຣະເຈົ້າແລະສິ່ງທີ່ພຣະເຈົ້າຊົງຮັກ



ເມື່ອມາພິຈານາເຖິງຄົນເຫຼົ່ານັ້ນທີ່ຕ້ອງຕາຍໄປເພາະເຂົາໄດ້ປະຕິເສດພຣະເຈົ້າ ກໍຊ່າງເປັນເລື່ອງທີ່ໜ້າເສົ້າໃຈແທ້ໆ; ພຣະເຈົ້າຊົງປາຖະໜາທີ່ຈະຍອມຮັບພວກເຂົາແຕ່ພຣະອົງຍອມຮັບແຕ່ຜູ້ທີ່ຕ້ອນຮັບພຣະອົງເທົ່ານັ້ນ ຫຼັງຈາກທີ່ຝົນໄດ້ຕົກລົງມາດົນເຖິງ 40 ມື້ແລ້ວ ນ້ຳກໍຍັງຄົງປົກຄຸມແຜ່ນດິນໂລກຢູ່ເປັນເວລາອີກ 150 ມື້ ດັ່ງນັ້ນເມື່ອລວມໝົດແລ້ວຈຶ່ງເປັນເວລາດົນເຖິງ 190 ມື້ ຊຶ່ງດົນກວ່າ 6 ເດືອນເສຍອີກ ຊຶ່ງຄົງບໍ່ມີໃຜສາມາດຈະມີຊີວິດຢູ່ໄດ້ດົນຂະໜາດນັ້ນເມື່ອຕ້ອງລອຍເກາະເສດໄມ້ໂດຍປາສະຈາກອາຫານໃດໆ ຄົນທັງຫຼາຍທີ່ບໍ່ເຊື່ອຟັງແລະປະຕິເສດພຣະເຈົ້າກໍຢູ່ນອກນາວາແລະຖືກທຳລາຍເສຍໝົດ ມີພຽງໂນອາແລະຄອບຄົວຂອງເພິ່ນເທົ່ານັ້ນທີ່ເຊື່ອພຣະເຈົ້າແລະໄດ້ຮັບການຊ່ວຍໃຫ້ລອດພົ້ນຈາກການພິພາກສາຂອງພຣະອົງ ພຣະເຈົ້າຊົງມີພຣະໄທອົດກັ້ນຕໍ່ມະນຸດພຣະອົງໄດ້ຊົງຄອຍຖ້າໃຫ້ພວກເຂົາກັບໃຈເສຍຈາກທາງຊົ່ວຂອງຕົນເອງຢູ່ດົນເຖິງ 120 ປີ ແຕ່ພວກເຂົາກັບປະຕິເສດທີ່ຈະເຊື່ອໃນພຣະເຈົ້າຢ່າງບໍ່ໄຍດີ.

*ປະຖົມມະການ 8:1-4 ພຣະເຈົ້າບໍ່ໄດ້ລືມໂລໂນອາພ້ອມທັງສັດຊະນິດຕ່າງໆທີ່ຢູ່ໃນເຮືອ; ພຣະອົງໄດ້ເຮັດລົມພັດມາແລະນ້ຳກໍໄດ້ບົກລົງ. ຮູນ້ຳໃຕ້ພື້ນດິນແລະປ່ອງນ້ຳເທິງທ້ອງຟ້າກໍຖືກອັດໝົດ. ຝົນເຊົາຕົກແລະນ້ຳກໍລົດໜ້ອຍຖອຍລົງຕາມລຳດັບເປັນເວລາຮ້ອຍຫ້າສິບມື້. ໃນມື້ທີ່ສິບເຈັດຂອງເດືອນທີ່ເຈັດເຮືອຂອງໂນອາໄດ້ຄ້າງຄາຢູ່ທີ່ເທິງພູໃນອາລາລັດ.*

ພຣະເຈົ້າຊົງຄຸ້ມຄອງໂນອາແລະຄອບຄົວຂອງເພິ່ນພ້ອມດ້ວຍສັດທັງຫຼາຍໄວ້ຢູ່ໃນນາວາໃຫ້ພົ້ນຈາກນ້ຳຖ້ວມນັ້ນແລ້ວພຣະ

ສາຂອງພຣະເຈົ້າໄດ້ເລີຍ ພຣະເຈົ້າຊົງບັນດານໃຫ້ຝົນຕົກເປັນເວລາ 40 ມື້ 40 ຄືນຈົນກະທັ້ງແຜ່ນດິນໂລກທັງໝົດແມ່ນແຕ່ຍອດເຂົາທີ່ສູງທີ່ສຸດກໍຖືກປົກຄຸມໄປດ້ວຍນໍ້າ.

*ປະຖົມມະການ 7:17-24 ນໍ້າໄດ້ຖ້ວມສືບຕໍ່ກັນຕະຫຼອດສີ່ສິບມື້ສີ່ສິບຄືນ; ນໍ້າມາກຂຶ້ນເລື້ອຍໆ ຈົນເຮືອຂອງໂນອາຟູຢູ່ເທິງໜ້ານໍ້າ ນໍ້າມາກຂຶ້ນເລື້ອຍໆ ຈົນເຮືອຂອງໂນອາໄຫຼໄປມາເທິງກະແສນໍ້າ ລະດັບນໍ້າໄດ້ສູງຂຶ້ນເລື້ອຍໆ ຈົນຖ້ວມພູຜາໜ່ວຍສູງສຸດໄປ; ໃນທີ່ສຸດນໍ້າໄດ້ຖ້ວມພູຜາໜ່ວຍທີ່ສູງສຸດໄປອີກເຈັດແມັດ , ທຸກໆສິ່ງທີ່ມີຢູ່ໃນໂລກໄດ້ຕາຍໝົດຄືນົກທຸກໆຊະນິດ, ສັດທຸກໆຊະນິດແລະຄົນທຸກໆຄົນ ທຸກໆສິ່ງທີ່ຫັນໃຈໄດ້ເທິງແຜ່ນດິນໂລກໄດ້ຕາຍໄປ; ພຣະຜູ້ເປັນເຈົ້າໄດ້ທຳລາຍທຸກໆສິ່ງທີ່ມີຊີວິດຢູ່ເທິງແຜ່ນດິນໂລກເຊັ່ນມະນຸດ, ສັດ ແລະນົກ. ທີ່ຍັງເຫຼືອຢູ່ມີແຕ່ຄອບຄົວຂອງໂນອາແລະສັດໃນເຮືອເທົ່ານັ້ນ; ລະດັບນໍ້າຖ້ວມຍັງຢູ່ສູງເປັນເວລາຮ້ອຍຫ້າສິບມື້.*





ພຣະເຈົ້າມີຄວາມຮັກຍິ່ງໃຫຍ່ຕໍ່ມະນຸດ, ດັ່ງນັ້ນຊາຕານຈຶ່ງກຽດຊັງມະນຸດຫຼາຍກວ່າສິ່ງໃດທັງໝົດ ບົດຮຽນຕໍ່ໄປພວກເຮົາຈະເຫັນວ່າຕໍ່ມາຊາຕານກໍໄດ້ລໍ້ລວງມະນຸດຈາກການຕິດຕາມພຣະເຈົ້າ ຜົນທີ່ເກີດຂຶ້ນເປັນສາເຫດຂອງການທົນທຸກທໍລະມານ, ຄວາມເຈັບປວດ ແລະການຕໍ່ສູ້ຕ່າງໆໃນຊີວິດທີ່ເຮົາຕ້ອງປະເຊີນຈົນເຖິງທຸກວັນນີ້.

ໂລກຂອງເຮົາທຸກວັນນີ້ເຕັມໄປດ້ວຍການ ຝ່າຝືນກົດໝາຍ, ອາຊະຍາກຳ, ການບໍ່ມີສິນທຳ, ການຫຼິ້ນຊູ້, ຄ້າປະເວນີ, ຢາເສບຕິດ, ມີການດື່ມສິ່ງມຶນເມົາ, ການໂລບກັນ, ການຂີ້ຕົວະ, ມີການຂີ້ລັກຢາກໄດ້ຂອງຄົນອື່ນ, ການຄາດຕະກຳແລະຄວາມຊົ່ວທຸກຢ່າງ... ແຕ່ກ່ອນໂລກຂອງເຮົາບໍ່ໄດ້ເປັນເຊັ່ນນີ້ ມີຢູ່ຊ່ວງໄລຍະເວລາໜຶ່ງທີ່ໂລກອຸດົມສົມບູນພ້ອມທຸກຢ່າງແລະບໍ່ມີພຶດຕິກຳຢ່າງນີ້ ຄືບໍ່ມີການໃຊ້ຄວາມຮຸນແຮງຫຼືບໍ່ມີຄວາມຊົ່ວພຽງແຕ່ຄັ້ງດຽວໃນແຜ່ນດິນໂລກນີ້ ຊຶ່ງແທ້ທີ່ຈິງແລ້ວບໍ່ມີການເຮັດຊົ່ວຈັກຄັ້ງດຽວເລີຍ ແຜ່ນດິນໂລກສົມບູນພ້ອມໄປດ້ວຍທຸກຢ່າງ ອາດາມແລະເອວາຮູ້ຈັກແຕ່ການປອງດອງກັນ ສັນຕິສຸກຄວາມຮັກແລະຄວາມຍິນດີ ຄວາມສົມບູນພ້ອມກັນຄວບຄຸມແລະຄອບຄອງໄປທຸກທີ່ ແຕ່ມີບາງສິ່ງເກີດຂຶ້ນແມ່ນຫຍັງທີ່ມາທຳລາຍຄວາມສົມບູນນີ້ ແລະກໍ່ໃຫ້ເກີດຄວາມຈິບຫາຍແລະການຝ່າຝືນກົດໝາຍໃນແຜ່ນດິນໂລກນີ້? ແມ່ນຫຍັງເຮັດໃຫ້ໃຈມະນຸດເສື່ອມໂຊມໄປ? ພວກເຮົາຈະໄດ້ຄົ້ນພົບໃນບົດຮຽນບົດຕໍ່ໄປ.

* ຂໍໃຫ້ຕອບຄຳຖາມບົດຮຽນທີ 2 ໃນໜ້າ 66 *

*ເອົາບົກຊະນິດລະເຈັດຄູ່ເຊັ່ນດຽວກັນ ເຮົາຢາກໃຫ້ສັດເຫຼົ່ານີ້ມີຊີວິດຢູ່ແລະອອກແມ່ແຜ່ລູກຕໍ່ໄປເທິງແຜ່ນດິນໂລກ ໃນເຈັດມື້ຂ້າງໜ້ານີ້ ເຮົາຈະໃຫ້ຝົນຕົກລົງມາເຊິ່ງຈະຕົກເປັນເວລາສີ່ສິບມື້ສີ່ສິບຄືນ ເພື່ອທຳລາຍທຸກສິ່ງທີ່ມີຊີວິດຊຶ່ງເຮົາໄດ້ສ້າງຂຶ້ນມານັ້ນໃຫ້ຈິບຫາຍໄປໝົດ; ຝ່າຍໂນອາກໍໄດ້ເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ.*

ໂນອາໄດ້ເຕືອນມະນຸດໃຫ້ຮູ້ເຖິງການພິພາກສາຂອງພຣະເຈົ້າຊຶ່ງຈະມາເຖິງນັ້ນແຕ່ພວກເຂົາບໍ່ຍອມກັບໃຈໃໝ່ພຣະເຈົ້າຊົງຄອຍຖ້າໃຫ້ພວກເຂົາປ່ຽນໃຈເປັນເວລາດົນເຖິງ 120 ປີ ແຕ່ເວລາທີ່ພຣະອົງຈະບໍ່ຄອຍຖ້າອີກຕໍ່ໄປກໍໄດ້ມາເຖິງ ຊຶ່ງເປັນເວລາທີ່ພຣະເຈົ້າຈະຊົງພິພາກສາພວກເຂົາ ພຣະເຈົ້າຊົງບັນຊາໃຫ້ໂນອາແລະຄອບຄົວພ້ອມດ້ວຍສັດທັງຫຼາຍເຂົ້າໄປໃນນາວາທາງປະຕູຊຶ່ງມີຢູ່ພຽງປະຕູດຽວນັ້ນ.

*ປະຖົມມະການ 7:15-16 ສັດໂຕຜູ້ແລະໂຕແມ່ຕາມແຕ່ລະຊະນິດຂອງມັນໄດ້ເຂົ້າໄປຢູ່ໃນເຮືອກັບໂນອາ ຕາມພຣະເຈົ້າໄດ້ສັ່ງແລ້ວ ພຣະຜູ້ເປັນເຈົ້າກໍໄດ້ອັດປະຕູເຮືອຫຼັງຈາກທີ່ໂນອາໄດ້ເຂົ້າໄປຫວິດແລ້ວ.*

ພຣະເຈົ້າຊົງບັນດານໃຫ້ບັນດາສັດທັງປວງມາຫາໂນອາໂດຍທີ່ເຂົາບໍ່ຕ້ອງອອກໄປຕາມລ່າພວກມັນໃນປ່າ ເມື່ອພຣະເຈົ້າຊົງປິດປະຕູນັ້ນລົງແລ້ວກໍສາຍເກີນໄປທີ່ໃຜຈະສາມາດເຂົ້າໄປໃນນາວາໄດ້ອີກ ບັນດາສິ່ງຕ່າງໆທັງປວງຊຶ່ງຢູ່ໃນນາວາກໍປອດໄພຈາກການພິພາກສາຂອງພຣະເຈົ້າທີ່ຈະມາເຖິງນັ້ນ ແລະບັນດາສິ່ງຕ່າງໆທັງປວງຊຶ່ງຢູ່ນອກນາວາກໍບໍ່ມີທາງທີ່ຈະລອດພົ້ນຈາກການພິພາກ

ດຽວມະນຸດທຸກຄົນແລະສັດທຸກໂຕທີ່ຈະລອດພົ້ນຈາກການພິພາກສາຂອງພຣະເຈົ້າໄດ້ນັ້ນຈະຕ້ອງເຂົ້າໄປໃນນາວາທາງປະຕູນີ້ພຽງປະຕູດຽວເທົ່ານັ້ນ ພຣະເຈົ້າຊົງໃຊ້ນາວາເພື່ອສະແດງພາບໃຫ້ເຫັນເຖິງສິ່ງທີ່ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຊຶ່ງຈະສະເດັດມານັ້ນຈະຊົງກະທຳເພື່ອຊ່ວຍຊີວິດມະນຸດໃຫ້ລອດພົ້ນຈາກຄວາມຊົ່ວຮ້າຍ, ຊາຕານແລະຄວາມຕາຍ ພຣະເຈົ້າຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ພຽງພຣະອົງດຽວເທົ່ານັ້ນຊຶ່ງກໍເໝືອນກັບທີ່ມີນາວາພຽງລຳດຽວຊຶ່ງມີປະຕູພຽງປະຕູດຽວເທົ່ານັ້ນ ເຮົາຈະມາສຶກສາກ່ຽວກັບເລື່ອງນີ້ກັນອີກໃນບົດຕໍ່ໄປ.

*ປະຖົມມະການ 6:22 ໂນອາໄດ້ເຮັດຕາມພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ.*

ໂນອາເຊື່ອຟັງພຣະເຈົ້າເພິ່ນຈຶ່ງເຮັດທຸກສິ່ງທຸກຢ່າງຕາມທີ່ພຣະເຈົ້າໄດ້ສັ່ງບັນຊາເພິ່ນໄວ້ ຂະນະທີ່ໂນອາສ້າງເຮືອນັ້ນເພິ່ນໄດ້ບອກຄົນຈຳນວນຫຼາຍທີ່ສຸດເທົ່າທີ່ເພິ່ນຈະສາມາດເຮັດໄດ້ເພື່ອໃຫ້ພວກເຂົາໄດ້ຮູ້ເຖິງວິທີການຂອງພຣະເຈົ້າທີ່ຈະໜີໃຫ້ລອດພົ້ນຈາກການພິພາກສາທີ່ຈະມາເຖິງນັ້ນ ທ່ານຄິດວ່າຈະມີໃຜຈັກຄົນທີ່ເຊື່ອໂນອາ? ບໍ່ມີໃຜຈັກຄົນເລີຍ ນອກຈາກຄອບຄົວຂອງໂນອາເທົ່ານັ້ນ.

*ປະຖົມມະການ 7:1-5 ພຣະຜູ້ເປັນເຈົ້າໄດ້ບອກໂນອາວ່າ "ຈົ່ງເຂົ້າໄປໃນເຮືອກັບຄອບຄົວທັງໝົດຂອງເຈົ້າ ເຮົາເຫັນແລ້ວວ່າແມ່ນເຈົ້າຜູ້ດຽວເທົ່ານັ້ນໃນໝົດທັງໂລກນີ້ທີ່ເຮັດສິ່ງຊອບທຳ; ຈົ່ງເອົາສັດທີ່ບໍ່ເປັນມົນທິນແນວລະເຈັດຄູ່ ແຕ່ສັດທີ່ເປັນມົນທິນນັ້ນໃຫ້ເອົາແນວລະຄູ່ ໃຫ້*



# ບົດທີ 3
# ຄວາມຊົ່ວໃນໂລກ

ອາດາມກັບເອວາ ອາໄສຢູ່ນຳກັນຢ່າງສະໜິດສະໜົມປອງດອງກັນຢ່າງສົມບູນແລະສະໜິດສະໜົມກັບພຣະເຈົ້າໃນສວນເອເດນ ແຕ່ບາງສິ່ງທີ່ຊົ່ວຮ້າຍກຳລັງຈະເກີດຂຶ້ນ.

*ປະຖົມມະການ 3:1 ງູເປັນສັດທີ່ມີເລ່ຫຼ່ຽມກວ່າສັດທັງປວງທີ່ພຣະເຈົ້າແຫ່ງຈັກກະວານໄດ້ສ້າງຂຶ້ນມາ. ງູຖາມຜູ້ຍິງວ່າ "ແມ່ນຄວາມຈິງບໍ ທີ່ພຣະເຈົ້າຫ້າມບໍ່ໃຫ້ກິນໝາກໄມ້ໃດໆ ໃນສວນນີ້?".*



ຊາຕານກຽດຊັງພຣະເຈົ້າແລະມັນຕ້ອງການທີ່ຈະທຳລາຍມະນຸດ ມັນໄດ້ເຂົ້າສິງໃນງູແລະໄດ້ເວົ້າຜ່ານງູໂຕນັ້ນ, ຄຳເວົ້າທຳ

ອິດຂອງມັນທີ່ມັນເວົ້າກັບມະນຸດກໍເພື່ອສ້າງຄວາມສົງໄສໃຫ້ເກີດຂຶ້ນກັບຄໍາສັ່ງຂອງພຣະເຈົ້າ ໂດຍການຕັ້ງຄໍາຖາມຕໍ່ຄໍາສັ່ງນັ້ນ; ມັນກ່າວວ່າ "ພຣະເຈົ້າຊົງສັ່ງຢ່າງນີ້ແທ້ໆບໍ?" ມັນໄດ້ສ້າງຄວາມສົງໄສຂຶ້ນໃນໃຈຂອງເອວາ ກົນອຸບາຍຂອງຊາຕານບໍ່ເຄີຍປ່ຽນແປງ ມັນຍັງຄົງພະຍາຍາມທີ່ຈະລໍ້ລວງມະນຸດ, ຊາຕານສາມາດຈະສ້າງຄວາມຄິດທີ່ເປັນຄວາມບໍ່ຈິງຂຶ້ນໃນໃຈຂອງພວກເຮົາໄດ້ ມັນເຮັດໃຫ້ຄົນເກີດຄໍາຖາມກັບຄໍາສັ່ງຫຼືພຣະຄໍາຂອງພຣະເຈົ້າເໝືອນທີ່ມັນໄດ້ກະທໍາກັບເອວາ ພວກເຮົາອາດຈະຄິດວ່າ "ເປັນຫຍັງຂ້ອຍຕ້ອງເຊື່ອພຣະຄໍາພີດ້ວຍ? ນີ້ເປັນພຣະຄໍາຂອງພຣະເຈົ້າແທ້ໆບໍ?" ຈົ່ງຢ່າຍອມໃຫ້ຊາຕານລໍ້ລວງເຈົ້າໃຫ້ເຊື່ອເລື່ອງຕົວະໃດໆ ບໍ່ດັ່ງນັ້ນເຈົ້າຈະຕາຍ.

*ປະຖົມມະການ 3:2-3 ຜູ້ຍິງຈຶ່ງຕອບວ່າ "ໝາກໄມ້ທຸກກົກຢູ່ໃນສວນນີ້ພວກເຮົາກິນໄດ້ໝົດ ເວັ້ນໄວ້ແຕ່ໝາກໄມ້ທີ່ຢູ່ກາງສວນ ພຣະເຈົ້າບອກພວກເຮົາບໍ່ໃຫ້ກິນຫຼືແມ່ນແຕ່ແຕະຕ້ອງມັນເປັນເດັດຂາດ. ຖ້າພວກເຮົາຂືນກິນເມື່ອໃດພວກເຮົາຈະຕາຍເມື່ອນັ້ນ".*

ເອວາຮູ້ສຶກສັບສົນ ນາງໄດ້ເພີ່ມຖ້ອຍຄໍາທີ່ວ່າ "ເຈົ້າຢ່າ ແຕະຕ້ອງມັນ" ຊຶ່ງນີ້ບໍ່ແມ່ນສິ່ງທີ່ພຣະເຈົ້າສັ່ງຕັ້ງແຕ່ເດີມໃນປະຖົມມະການ 2:17 ພຣະເຈົ້າພຽງແຕ່ສັ່ງວ່າຖ້າເຈົ້າກິນເຈົ້າຈະຕາຍ.

*ປະຖົມມະການ 3:4-5 ງູຕອບວ່າ "ບໍ່ເປັນຄວາມຈິງດອກ; ເຈົ້າຈະບໍ່ຕາຍ. ພຣະເຈົ້າກ່າວເຊັ່ນນັ້ນ ພຣະອົງຮູ້ວ່າ ຄັນເຈົ້າກິນໝາກໄມ້ນັ້ນເມື່ອໃດ ເຈົ້າກໍຈະເປັນເໝືອນພຣະເຈົ້າເມື່ອນັ້ນ; ແລະເຈົ້າກໍຈະຮູ້ຈັກດີຮູ້ຈັກຊົ່ວ".*



ຊ້າຢ່າງຍິ່ງ ພຣະເຈົ້າຈຶ່ງຊົງຕັດສິນພຣະໄທທີ່ຈະທໍາລາຍມະນຸດເສຍແລະເລີ່ມຕົ້ນໃໝ່ກັບໂນອາແລະຄອບຄົວຂອງເພິ່ນ.

*ປະຖົມມະການ 6:8-10 ແຕ່ພຣະຜູ້ເປັນເຈົ້າພໍໃຈນໍາໂນອາ; ປະຫວັດຂອງໂນອາ ເປັນມາດັ່ງນີ້: ເພິ່ນມີລູກຊາຍຢູ່ສາມຄົນຄື ເຊມ, ຮາມແລະຢາເຟດ. ໂນອາເປັນຄົນດີແລະແມ່ນເພິ່ນຜູ້ດຽວເທົ່ານັ້ນທີ່ພຣະເຈົ້າພໍໃຈນໍາເພາະເພິ່ນໄດ້ດໍາເນີນຊີວິດໃນຄວາມສາມັກຄີທໍາກັບພຣະເຈົ້າ.*

ໂນອາເກີດມາໂດຍຖືກແຍກຈາກພຣະເຈົ້າແລະຢູ່ພາຍໃຕ້ການຄອບງໍາຂອງຊາຕານເໝືອນກັບລູກຫຼານຂອງອາດາມທຸກຄົນ ໂນອາບໍ່ສົມຄວນທີ່ຈະໄດ້ຮັບການຊ່ວຍໃຫ້ລອດຈາກພຣະເຈົ້າ ໂນອາ ສົມຄວນທີ່ຈະຖືກລົງໂທດເຊັ່ນດຽວກັນ ແຕ່ເພິ່ນເຊື່ອພຣະເຈົ້າແລະເຂົ້າມາຫາພຣະເຈົ້າຕາມຢ່າງອາເບັນໂດຍໄດ້ນໍາເລືອດສັດເຂົ້າມາຖວາຍບູຊາ ພຣະເຈົ້າຈຶ່ງຊົງໃຫ້ອະໄພໂທດແລະຊົງຍອມຮັບໂນອາ ພຣະເຈົ້າຊົງຊ່ວຍໂນອາແລະຄອບຄົວຂອງເພິ່ນໃຫ້ລອດພົ້ນຈາກການພິພາກສາທີ່ຈະມາເຖິງເພາະພວກເຂົາເຊື່ອໃນພຣະອົງ.

ໃນຂໍ້ພຣະຄໍາພີຂໍ້ຕໍ່ໆໄປນັ້ນພຣະເຈົ້າໄດ້ສັ່ງໃຫ້ໂນອາວ່າພຣະອົງຈະບັນດານໃຫ້ເກີດນໍ້າຖ້ວມຄັ້ງໃຫຍ່ ຊຶ່ງຈະປົກຄຸມໄປທົ່ວແຜ່ນດິນໂລກທັງໝົດ ພຣະອົງຊົງສັ່ງໃຫ້ໂນອາສ້າງເຮືອໃຫຍ່ຂຶ້ນມາລໍາໜຶ່ງ ເອີ້ນວ່າ **"<u>ນາວາ</u>"** ເພື່ອວ່າຄົນເຫຼົ່ານັ້ນທຸກຄົນທີ່ເຊື່ອພຣະເຈົ້າຈະໄດ້ຮັບຄວາມລອດ ທາງທີ່ຈະເຂົ້າໄປໃນນາວາມີຢູ່ພຽງທາງດຽວເທົ່ານັ້ນ ພຣະເຈົ້າຊົງບັນຊາໃຫ້ໂນອາສ້າງປະຕູຂຶ້ນມາພຽງປະ

*ປະຖົມມະການ 6:3 ດັ່ງນັ້ນພຣະຜູ້ເປັນເຈົ້າເຫັນຈັ່ງຊັ້ນຈຶ່ງກ່າວວ່າ "ເຮົາຈະບໍ່ອະນຸຍາດໃຫ້ມະນຸດມີຊີວິດຢູ່ຕະຫຼອດໄປ ເພາະພວກເຂົາເປັນມະນຸດທີ່ຕ້ອງຕາຍ ຈາກບັດນີ້ໄປພວກເຂົາຈະມີອາຍຸບໍ່ກາຍຮ້ອຍຊາວປີ".*

ພຣະເຈົ້າຈະບໍ່ຍອມອົດກັ້ນໃຫ້ສະຖານະການເປັນເຊັ່ນນີ້ຕະຫຼອດໄປເປັນນິດ ພຣະອົງຊົງທອດພຣະເນດເຫັນຄວາມບໍ່ເຊື່ອຟັງແລະຊົງກຽດຊັງຄວາມບໍ່ເຊື່ອຟັງຂອງຄົນເຫຼົ່ານີ້ ແຕ່ພຣະອົງກໍຍັງຮັກແລະປາຖະໜາທີ່ຈະຍອມຮັບພວກເຂົາ ຢ່າງໃດກໍຕາມ ການທີ່ຈະເປັນທີ່ພໍພຣະໄທໄດ້ນັ້ນພວກເຂົາຈະຕ້ອງຍອມຮັບວ່າພວກເຂົາໄດ້ກະທຳຄວາມຜິດແລະມາເຊື່ອພຣະເຈົ້າ ການປ່ຽນແປງພາຍໃນຈະສະແດງອອກມາເປັນພຶດຕິກຳພາຍນອກອອກມາໃຫ້ເຫັນໂດຍການມາຫາພຣະເຈົ້າຕາມວິທີການທີ່ພຣະເຈົ້າຊົງບັນຊາແກ່ອາດາມ ແລະເອວາ ຊຶ່ງກໍຄືການຖວາຍລູກແກະເປັນເຄື່ອງບູຊາເໝືອນຢ່າງອາເບັນທີ່ໄດ້ກະທຳນັ້ນ ພຣະເຈົ້າກ່າວວ່າ ພຣະອົງຈະປະທານເວລາໃຫ້ແກ່ມະນຸດ 120 ປີ ເພື່ອຈະປ່ຽນແປງຄວາມຄິດແລະການປະພຶດຂອງຕົນເອງ ຖ້າບໍ່ດັ່ງນັ້ນພຣະອົງກໍຈະຊົງພິພາກສາພວກເຂົາ.

*ປະຖົມມະການ 6:6-7 ພຣະອົງຈຶ່ງເສຍໃຈຫຼາຍທີ່ໄດ້ສ້າງພວກເຂົາແລະໃຫ້ພວກເຂົາຢູ່ເທິງແຜ່ນດິນໂລກ;ພຣະອົງກິນແໜງໃຈຫຼາຍຈຶ່ງກ່າວວ່າ "ເຮົາຈະທຳລາຍມະນຸດເຫຼົ່ານີ້ທີ່ເຮົາໄດ້ສ້າງມາ ພ້ອມທັງສັດທັງຫຼາຍແລະນົກຕ່າງໆ ເພາະເຮົາເສຍໃຈທີ່ໄດ້ສ້າງພວກເຂົາ".*

ພຣະເຈົ້າຊົງເສຍໃຈຫຼາຍກັບການປະພຶດແລະທ່າທີຂອງມະນຸດ ພວກເຂົາໄດ້ເຮັດໃຫ້ສະຖານະການຊົ່ວຮ້າຍລົງຈົນພຣະເຈົ້າບໍ່ສາມາດຈະອົດກັ້ນພຣະໄທໄດ້ອີກຕໍ່ໄປ ມະນຸດໄດ້ເຮັດການຊົ່ວ



ເປົ້າໝາຍສູງສຸດຂອງຊາຕານກໍຄື ເຮັດໃຫ້ຄົນອື່ນໆຕິດຕາມມັນແລະບໍ່ຕິດຕາມພຣະເຈົ້າ ມັນເລີ່ມກ້າຂຶ້ນແລະຕົວະຢ່າງແຈ່ມແຈ້ງໂດຍໄດ້ເວົ້າຂັດແຍ່ງກັບຄຳສັ່ງຂອງພຣະເຈົ້າ ຊາຕານກ່າວວ່າພຣະເຈົ້າຕົວະ ໃຜກັນແທ້ທີ່ເວົ້າຄວາມບໍ່ຈິງ ພຣະເຈົ້າຕ່າງຫາກທີ່ຊົງບອກຄວາມຈິງສະເໝີ ຊາຕານສະເໜີແນະໃຫ້ເອວາດຳເນີນຊີວິດທີ່ເປັນອິດສະຫຼະຈາກພຣະເຈົ້າແລະປົກຄອງຊີວິດຂອງຕົນເອງ.

*ປະຖົມມະການ 3:6 ຜູ້ຍິງເຫັນວ່າຕົ້ນໄມ້ນັ້ນລ່ຳງາມແທ້ແລະໝາກໄມ້ກໍເປັນຕາຢາກກິນອີຫຼີ; ທັງຄິດວ່າຖ້າຕົນສະຫຼາດຂຶ້ນກໍຄົງດີຍິ່ງ ດັ່ງນັ້ນນາງຈຶ່ງປົດເອົາໝາກໄມ້ມາກິນ ແລ້ວກໍເອົາໄປໃຫ້ຜົວຂອງຕົນກິນນຳດ້ວຍ.*



ຊາຕານລໍ້ລວງເອວາກ່ຽວກັບສັດຈະທຳຫຼືຄວາມຈິງໃນຄຳສັ່ງຂອງພຣະເຈົ້າ ນາງຄິດວ່າ ແທ້ທີ່ຈິງແລ້ວນາງຄົງຈະບໍ່ຕາຍດອກນາງຄິດແທ້ໆ ຊາຕານປາຖະໜາທີ່ຈະເຮັດໃຫ້ຄົນຮູ້ສຶກສັບສົນວ່າອັນໃດຈິງແລະອັນໃດບໍ່ຈິງ ເອວາ ກິນໝາກໄມ້ນັ້ນເພາະຖືກລໍ້ລວງ

ແຕ່ອາດາມເຈຕະນາເລືອກທີ່ຈະບໍ່ເຊື່ອຟັງພຣະເຈົ້າ ອາດາມບໍ່ໄດ້ຖືກລໍ້ລວງເໝືອນເອວາ ອາດາມຮູ້ຢ່າງແນ່ນອນວ່າ ຂະນະທີ່ພວກເຂົາກິນໝາກໄມ້ນັ້ນພວກເຂົາກຳລັງເຮັດຫຍັງລົງໄປ ທັງສອງຄົນເລືອກທີ່ຈະເຮັດຕາມວິທີຂອງຕົນເອງແທນທີ່ຈະກະທຳສິ່ງທີ່ຖືກຕ້ອງແລະເຊື່ອຟັງຄຳສັ່ງຂອງພຣະເຈົ້າ.

*ປະຖົມມະການ 3:7ຫຼັງຈາກກິນໝາກໄມ້ແລ້ວພວກເຂົາກໍມີຄວາມເຂົ້າໃຈໃນທັນໃດແລະທັງຮູ້ວ່າພວກຕົນເປືອຍກາຍ; ດັ່ງນັ້ນພວກເຂົາຈຶ່ງພາກັນເອົາໃບໄມ້ມາຫຍິບເຂົ້າກັນ ເພື່ອປົກປິດຮ່າງກາຍຕົນເອງໄວ້.*

ການບໍ່ເຊື່ອຟັງຂອງອາດາມແລະເອວາໄດ້ແຍກພວກເຂົາອອກຈາກພຣະເຈົ້າແລະແຍກຄວາມສຳພັນຂອງພວກເຂົາທີ່ມີກັບພຣະເຈົ້າດ້ວຍ ເຊັ່ນດຽວກັບກິ່ງໄມ້ທີ່ຫັກອອກຈາກຕົ້ນຍ່ອມຖືກແຍກອອກຈາກແຫຼ່ງຊີວິດຂອງມັນ, ອາດາມແລະເອວາກໍຖືກແຍກອອກຈາກພຣະເຈົ້າຜູ້ຊົງເປັນແຫຼ່ງແລະຜູ້ດຳລົງຮັກສາຊີວິດ ເຊັ່ນດຽວກັນກິ່ງໄມ້ຈະແຫ່ວແຫ້ງຕາຍໄປໃນທີ່ສຸດສັນໃດ ອາດາມແລະເອວາກໍຈະຕ້ອງຕາຍຝ່າຍຮ່າງກາຍໃນມື້ໃດມື້ໜຶ່ງ ສັນນັ້ນ ແລະພວກເຂົາຈະຕ້ອງໄປສູ່ສະຖານທີ່ຊຶ່ງພຣະເຈົ້າໄດ້ຕຽມໄວ້ສຳລັບຊາຕານແລະວິນຍານຊົ່ວທັງຫຼາຍດ້ວຍ.

ອາດາມແລະເອວາຮູ້ສຶກອັບອາຍແລະຮູ້ສຶກວ່າຕົນເປືອຍກາຍຢູ່ພວກເຂົາຈຶ່ງເອົາໃບໄມ້ມາຫຍິບເຂົ້າກັນເພື່ອປິດຕົນຕົວໄວ້ທັງສອງຄົນພະຍາຍາມຈະຈັດຕຽມບາງສິ່ງສຳລັບຄວາມຕ້ອງການຂອງຕົນເອງ ແຕ່ດຽວນີ້ພວກເຂົາທັງສອງພະຍາຍາມທີ່ຈະເປັນອິດ



ມະນຸດສ່ວນຫຼາຍປະພຶດຕາມທາງຂອງກາອິນພວກເຂົາບໍ່ມີຂໍ້ແກ້ຕົວສຳລັບການປະພຶດຂອງຕົນເອງ ພຣະເຈົ້າຊົງໃຊ້ໂນອາເພື່ອໄປບອກມະນຸດໃຫ້ຫັນເສຍຈາກຄວາມບາບແລະວາງໃຈໃນພຣະເຈົ້າ ແຕ່ມະນຸດປະຕິເສດທີ່ຈະຟັງໂນອາ ພວກເຂົາທັງຈອງຫອງ ສົນໃຈແຕ່ຕົນເອງແລະມັກເວົ້າຈາໂອ້ອວດ ມະນຸດມີແຕ່ຄວາມໂລບຊຶ່ງໝາຍເຖິງຄວາມຕ້ອງການທີ່ຢາກຈະໄດ້ຂອງຜູ້ອື່ນ ພວກເຂົາອິດສາບັງບຽດແລະກຽດຊັງຜູ້ອື່ນ ພວກເຂົາໂຕ້ຖຽງແລະຕໍ່ສູ້ກັນຕະຫຼອດເວລາ ພວກເຂົາໂຫດຮ້າຍຕໍ່ກັນແລະກັນ ພວກເຂົາຊຸບຊິບນິນທາແລະເວົ້າໃຫ້ຮ້າຍລັບຫຼັງກັນຢູ່ສະເໝີ ພວກເຂົາບໍ່ມີການຄວບຄຸມຄວາມຮູ້ສຶກທາງເພດເລີຍ ແຜ່ນດິນໂລກກໍຊົ່ວຊ້າແລະເຕັມໄປດ້ວຍຄວາມອຳມະຫິດ ທ່ານຄິດວ່າໃຜຢູ່ເບື້ອງຫຼັງຄວາມຊົ່ວຮ້າຍທັງຫຼາຍນີ້? ທ່ານຄິດວ່າໃຜຕ້ອງການທີ່ເຮັດໃຫ້ມະນຸດຊົ່ວຊ້າແລະທຳລາຍມະນຸດເສຍເພື່ອວ່າ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ຈະບໍ່ສາມາດກຳເນີດມາໄດ້? ຊື່ຂອງມັນຄື **ຊາຕານ** ນັ້ນເອງ.

ພຣະເຈົ້າຊົງທອດພຣະເນດເຫັນຄວາມບາບທັງໝົດຂອງເຂົາແມ່ນວ່າພວກເຂົາຈະພະຍາຍາມປິດບັງລີ້ຊ່ອນ, ການຂີ້ຕົວະ, ການຫຼິ້ນຊູ້, ການລັກໂລບແລະການຄາດຕະກຳໄວ້ຈາກຄົນອື່ນໆ ແຕ່ບໍ່ມີຈັກສິ່ງໃນບັນດາສິ່ງເຫຼົ່ານີ້ທີ່ຖືກປິດບັງລີ້ຊ່ອນຈາກພຣະເຈົ້າໄດ້ ພຣະອົງຊົງຮູ້ຄວາມຄິດຂອງເຮົາແລະໄດ້ຍິນຖ້ອຍຄຳທຸກຄຳທີ່ເຮົາເວົ້າອອກໄປແລະຊົງຮູ້ຄວາມມຸ່ງໝາຍທີ່ຢູ່ພາຍໃນຈິດໃຈຂອງເຮົາດ້ວຍ.

ປະເດັນທີ 4 ສາຍເຫດຂອງຄວາມຕາຍຍະນະເກີດຈາກຜົນຂອງຄວາມຊົ່ວຮ້າຍຊົ່ວຊ້າຂອງມະນຸດນັ້ນເອງ.

ເຮົາຈະມາສຶກສາເຖິງເລື່ອງລາວໃນພຣະຄຳພີກ່ຽວກັບນ້ຳຖ້ວມໂລກນຳກັນໃນບົດຮຽນນີ້. ໃນບົດຮຽນທີ່ຜ່ານມາເຮົາໄດ້ຮຽນຮູ້ແລ້ວວ່າ ພຣະເຈົ້າຊົງປະທານລູກອີກຄົນໜຶ່ງແກ່ອາດາມແລະເອວາ ຊຶ່ງມີຊື່ວ່າ ເຊດ ເຊດກໍຍັງມີລູກຫຼານຕໍ່ໆກັນມາເລື້ອຍໆອີກຫຼາຍຊົ່ວອາຍຸຄົນ ລູກຫຼານຂອງເຊດເຊື່ອພຣະເຈົ້າແລະເຝົ້າລໍຄອຍ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ທີ່ຈະສະເດັດມາຕາມທີ່ພຣະເຈົ້າໄດ້ຊົງສັນຍາໃນສວນເອເດນ ໂນອາເຊິ່ງເປັນເຊື້ອສາຍຂອງເຊດມີຊີວິດເມື່ອປະມານ 1.500 ປີຫຼັງຈາກທີ່ພຣະເຈົ້າໄດ້ຊົງສ້າງອາດາມ, ໂນອາມີລູກຊາຍ 3 ຄົນຄື : ເຊມ, ຮາມ ແລະຢາເຟດ ໃນສະໄໝຂອງໂນອານັ້ນມີປະຊາກອນອາໄສຢູ່ເທິງແຜ່ນດິນໂລກເປັນຈຳນວນຫຼວງຫຼາຍ ຊຶ່ງອາດເປັນໄດ້ວ່າ ມີຈຳນວນຫຼາຍເຖິງ 3 ພັນລ້ານຄົນ ໂດຍຄົນສ່ວນໃຫຍ່ສົນໃຈທີ່ຈະປະພຶດຕາມທາງຂອງກາອິນເທົ່ານັ້ນ.

*ປະຖົມມະການ 6:5 ເມື່ອພຣະຜູ້ເປັນເຈົ້າເຫັນວ່າມະນຸດຊົ່ວຮ້າຍຫຼາຍຂຶ້ນ ແລະຄວາມຄິດຊົ່ວກໍບັງຄັບຈິດໃຈພວກເຂົາຢູ່ທຸກເວລາ".*

ມະນຸດສ່ວນໃຫຍ່ຊົ່ວຊ້າແລະຄວາມຄິດຂອງເຂົາກໍຊົ່ວຮ້າຍຢູ່ຕະຫຼອດເວລາ.

*ປະຖົມມະການ 6:11-12 ແຕ່ພວກອື່ນໆທຸກຄົນໄດ້ເຮັດຊົ່ວໃນສາຍຕາຂອງພຣະເຈົ້າແລະການຂ້າຟັນລັນແທງກັນກໍແຜ່ລາມໄປທົ່ວທຸກທີ່ທຸກບ່ອນ; ພຣະເຈົ້າເບິ່ງໂລກນີ້ແລະເຫັນວ່າມີແຕ່ຄວາມຊົ່ວຮ້າຍຍ້ອນມະນຸດທັງປວງເຮັດແຕ່ຄວາມຊົ່ວຊ້າທັງສິ້ນ.*



ສະຫຼະຈາກພຣະເຈົ້າ ທຸກມື້ນີ້ມີຄົນຈຳນວນຫຼວງຫຼາຍທີ່ຄິດວ່າພວກເຂົາສາມາດເຮັດໃຫ້ຕົນເອງເປັນທີ່ພໍພຣະໄທພຣະເຈົ້າໄດ້ໂດຍການເອົາໃບໄມ້ມາຫຍິບເຂົ້າກັນເພື່ອປົກປິດຕົນໂຕຂອງຕົນເອງຊຶ່ງແມ່ນລັກສະນະທີ່ປະກົດການພາຍນອກເໝືອນອາດາມແລະເອວາໄດ້ພະຍາຍາມທີ່ຈະເຮັດໃຫ້ຕົນເອງເປັນທີ່ພໍພະໄທພຣະເຈົ້າໂດຍການສວມໃສ່ເຄື່ອງປົກປິດ ຢ່າງໃດກໍຕາມພຣະເຈົ້າບໍ່ຍອມຮັບເຮົາໂດຍອາໄສພື້ນຖານຂອງລັກສະນະທີ່ປາກົດພາຍນອກຂອງເຮົາເລີຍ.

*ປະຖົມມະການ 3:8-9 ໃນແລງມື້ນັ້ນພວກເຂົາໄດ້ຍິນສຽງຍ່າງຂອງພຣະເຈົ້າແຕ່ງຈັກກະວານຢູ່ໃນສວນ ຈຶ່ງລົບລີ້ຊ່ອນຕົວຢູ່ໃນທ່າມກາງຕົ້ນໄມ້ທັງຫຼາຍ. ແຕ່ພຣະເຈົ້າແຕ່ງຈັກກະວານໄດ້ເອີ້ນຫາຊາຍຜູ້ນັ້ນວ່າ "ເຈົ້າຢູ່ໃສ?".*



ພຣະເຈົ້າຊົງສະເດັດມາຫາຄົນທັງສອງ ຢ່າງພຣະບິດາຜູ້ຊົງປ່ຽມລົ້ນດ້ວຍຄວາມຮັກ ພວກເຂົາບໍ່ໄດ້ອອກໄປຕາມຫາພຣະອົງ ພວກເຂົາກັບແລ່ນໜີແລະຊ່ອນຕົວເສຍຈາກພຣະເຈົ້າ ທັງສອງຄົນກຳລັງຮັບຮູ້ເຖິງຂັ້ນທຳອິດຂອງຄວາມຕາຍ ຄືການຖືກແຍກອອກ

ຈາກຄວາມສຳພັນທີ່ເຄີຍມີກັບພຣະເຈົ້າ ພຣະເຈົ້າຊົງຮູ້ດີວ່າເກີດຫຍັງຂຶ້ນແຕ່ພຣະອົງກໍຍັງຄົງສັດຊື່ໃນການສົນທະນາກັບພວກເຂົາ ພຣະເຈົ້າຊົງຮູ້ວ່າອາດາມກັບເອວາຢູ່ທີ່ໃດແຕ່ພຣະອົງຊົງປາຖະໜາທີ່ຈະໃຫ້ພວກເຂົາສຳນຶກວ່າການແຍກອອກຈາກກັນໄດ້ເກີດຂຶ້ນແລ້ວ.

*ປະຖົມມະການ 3:10-13 ລາວຕອບວ່າ "ຜູ້ຂ້າຍິນສຽງຂອງພຣະອົງຢູ່ໃນສວນ ຜູ້ຂ້າຢ້ານກົວຈຶ່ງຫຼົບລີ້ຊ່ອນຕົວຢູ່ ເພາະຜູ້ຂ້າເປືອຍກາຍ" ພຣະເຈົ້າຖາມວ່າ "ໃຜບອກວ່າເຈົ້າເປືອຍກາຍ? ບໍ່ແມ່ນເຈົ້າກິນໝາກໄມ້ທີ່ເຮົາໄດ້ຫ້າມເຈົ້າບໍ່ໃຫ້ກິນນັ້ນບໍ?" ຜູ້ຊາຍຕອບວ່າ "ຜູ້ຍິງທີ່ພຣະອົງມອບໃຫ້ຜູ້ຂ້ານັ້ນຍື່ນໝາກໄມ້ໃຫ້ຜູ້ຂ້າກິນແລະຜູ້ຂ້າກໍກິນ" ພຣະຜູ້ເປັນເຈົ້າແຫ່ງຈັກກະວານຖາມຍິງນັ້ນວ່າ "ເປັນຫຍັງເຈົ້າຈຶ່ງເຮັດດັ່ງນີ້? ນາງຕອບວ່າ "ງູໄດ້ລໍ້ລວງຜູ້ຂ້າໃຫ້ກິນ".*

ທ່ານສາມາດເຫັນໄດ້ຢ່າງຊັດເຈນເຖິງການຂາດຄວາມເປັນນ້ຳໜຶ່ງໃຈດຽວກັນລະຫວ່າງອາດາມກັບເອວາແລະລະຫວ່າງພວກເຂົາກັບພຣະເຈົ້າ ທັງອາດາມແລະເອວາຕ່າງກໍກ່າວຫາຜູ້ອື່ນ ແທນທີ່ຈະຍອມຮັບຄວາມຮັບຜິດຊອບໃນສ່ວນຂອງຕົນເອງ ອາດາມຕຳນິພຣະເຈົ້າກັບເອວາ ສ່ວນເອວາຕຳນິງູ ການກະທຳເຊັ່ນນີ້ເປັນການກະທຳທີ່ບໍ່ຊື່ສັດແລະບໍ່ຖືກຕ້ອງດ້ວຍ ພວກເຂົາທັງສອງເລືອກທີ່ຈະບໍ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າ.

*ປະຖົມມະການ 3:14-15 ແລ້ວພຣະເຈົ້າແຫ່ງຈັກກະວານກໍໄດ້ກ່າວຕໍ່ງູນັ້ນວ່າ " ດ້ວຍວ່າມຶງໄດ້ເຮັດສິ່ງນີ້ ມຶງເທົ່ານັ້ນທີ່ຖືກສາບແຊ່ງໃນຈຳ*



# ບົດທີ 5
# ນ້ຳຖ້ວມໃນສະໄໝໂນອາ

ໃນປະຈຸບັນ ມີຕຳນານບູຮານກ່ຽວກັບນ້ຳຖ້ວມຢ່າງນ້ອຍໆປະມານ 213 ເລື່ອງທີ່ໄດ້ຖືກບັນທຶກໄວ້ໂດຍກຸ່ມຄົນຈາກທົ່ວທຸກມູມໂລກ ຊຶ່ງສາມາດຈຳແນກອອກໄດ້ເປັນ 31 ເລື່ອງຈາກທະວີບເອີລົບ, 17 ເລື່ອງຈາກທະວີບອາຟຣິກາແລະຕາເວັນອອກກາງ, 37 ເລື່ອງຈາກທະວີບອິດສະເຕເລຍແລະໝູ່ເກາະທະເລໃຕ້, 23 ເລື່ອງຈາກທະວີບອາຊີ, 59 ເລື່ອງຈາກຊົນເຜົ່າອິນເດຍໃນທະວີບອາເມລິກາເໜືອ ແລະອີກ 46 ເລື່ອງຈາກທະວີບອາເມລິກາກາງແລະອາເມລິກາໃຕ້.

ຕຳນານທັງໝົດເຫຼົ່ານີ້ຕ່າງກໍມີຄວາມສອດຄ້ອງກັນໃນປະເດັນສຳຄັນໆ 3 ປະເດັນນຳກັນແລະສ່ວນໃຫຍ່ມີຄວາມສອດຄ້ອງກັນໃນປະເດັນທີ 4 ດ້ວຍ.

ປະເດັນທີ 1 ນ້ຳໄດ້ຖ້ວມທຳລາຍລ້າງມະນຸດແລະສັດຕ່າງໆທົ່ວໂລກ.

ປະເດັນທີ 2 ມີການຈັດຕຽມເຮືອເພື່ອໃຊ້ເປັນວິທີທີ່ຈະໜີຈາກນ້ຳຖ້ວມ.

ປະເດັນທີ 3 ມະນຸດຊາດຈຳນວນໜ້ອຍໜຶ່ງເທົ່ານັ້ນທີ່ໄດ້ຮັບການຊ່ວຍເຫຼືອໃຫ້ລອດພົ້ນເພື່ອຈະຮັກສາເຜົ່າພັນມະນຸດໄວ້ໄດ້.

*ພວກສັດແຫ່ງໂລກເຮົານີ້ທັງໝົດ ແຕ່ນີ້ຕໍ່ໄປເລື້ອຍໆມຶງຈະເລືອດ້ວຍທ້ອງຂອງມຶງແລະຈະໄດ້ກິນຂີ້ດິນເປັນອາຫານໄປເລື້ອຍໆ ມຶງກັບຍິງນັ້ນຈະຖືກເຮັດໃຫ້ກຽດຊັງກັນ ພົງພັນຂອງຍິງແລະມຶງຈະເປັນສັດຕູຄູ່ອາຄາດ ພົງພັນຂອງຍິງນັ້ນຈະຢຽບຫົວມຶງໃຫ້ມຸ່ນແລະພົງພັນມຶງກໍຈະຕອດສົ້ນໜ່ອງເຂົາໃຫ້ບວມ".*

ປະການທຳອິດ ພຣະເຈົ້າຊົງສາບແຊ່ງ ປະການທີສອງ ພຣະເຈົ້າຊົງປະທານພຣະສັນຍາແລະມະຫັດສະຈັນຊຶ່ງເຕັມໄປດ້ວຍຄວາມໝາຍທີ່ດີ ເມື່ອມາເຖິງຈຸດນີ້ຊາຕານຄິດວ່າມັນປາບພຣະເຈົ້າລົງໄດ້ແລະຄວບຄຸມໂລກນີ້ໄດ້ຢ່າງສົມບູນແລ້ວ ແຕ່ບໍ່ມີໃຜສາມາດຈະເອົາຊະນະພຣະເຈົ້າໄດ້ ຈະມີຢູ່ມື້ໜຶ່ງທີ່ຜູ້ຍິງຈະໃຫ້ກຳເນີດເຊື້ອສາຍຄົນໜຶ່ງທີ່ຈະຕໍ່ສູ້ກັບເຊື້ອສາຍຂອງງູຊຶ່ງໝາຍເຖິງສາວົກຂອງຊາຕານນັ້ນເອງໃນການຕໍ່ສູ້ນັ້ນຫົວຂອງຊາຕານຈະຖືກຢຽບ (ມີບາດແຜເຖິງຕາຍ) ແຕ່ມັນຈະກະທຳໃຫ້ເຊື້ອສາຍຂອງນາງບາດເຈັບ, ເຊື້ອສາຍທ່ານນີ້ເປັນໃຜ? ໃນພຣະຄຳພີຈຸດນີ້ເຮົາຍັງບໍ່ຮູ້ນາມຂອງທ່ານ ໃຫ້ເຮົາເອີ້ນນາມຂອງທ່ານວ່າ **"<u>ພຣະຜູ້ຊ່ວຍໃຫ້ລອດພົ້ນ</u>".**

ພຣະເຈົ້າຊົງລົງໂທດຕໍ່ຄວາມຊົ່ວສະເໝີ ແຕ່ໃນຂະນະດຽວກັນ ພຣະເຈົ້າຊົງປ່ຽມລົ້ນດ້ວຍຄວາມຮັກ ຄວາມກະລຸນາ ຄວາມເມດຕາ ແລະຄວາມປານີເຊັ່ນດຽວກັນ ພຣະເຈົ້າຊົງສັນຍາວ່າຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາໃຫ້ ເພື່ອມະນຸດຈະສາມາດລອດພົ້ນຈາກການລົງໂທດທີ່ພວກເຂົາສົມຄວນໄດ້ຮັບນັ້ນ ເຮົາໄດ້ຮຽນຮູ້ວ່າພຣະເຈົ້າດຳເນີນການຂັ້ນທຳອິດເພື່ອຕອບສະໜອງຕໍ່ຄວາມຊົ່ວທີ່ເຂົ້າມາທຳລາຍໂລກ ພຣະຜູ້ຊ່ວຍໃຫ້ລອດພົ້ນຈະເອົາຊະນະ

ຄວາມຊົ່ວໃນໂລກ ພຣະເຈົ້າບໍ່ຈຳເປັນທີ່ຈະຕ້ອງແບກຮັບຄວາມຮັບຜິດຊອບນີ້ເລີຍ ແຕ່ພຣະເຈົ້າຊົງກະທຳເຊັ່ນນີ້ເພາະພຣະອົງຊົງປາຖະໜາທີ່ຈະໃຫ້ສິ່ງຕ່າງໆ ນັ້ນຖືກຕ້ອງແລະດີງາມ ແລະນີ້ຍັງສະແດງໃຫ້ເຮົາໄດ້ເຫັນວ່າພຣະອົງຊົງຮັກມະນຸດຫຼາຍພຽງໃດ.

*ປະຖົມມະການ 3:16 ແລ້ວພຣະເຈົ້າແຫ່ງຈັກກະວານກໍໄດ້ກ່າວກັບຍິງນັ້ນວ່າ "ເຮົາຈະເພີ່ມຄວາມລຳບາກເມື່ອເຈົ້າຫາກຖືພາ ເຈົ້າຈະຕ້ອງເບັ່ງລູກນັ້ນອອກມາຢ່າງເຈັບປວດເຫຼືອລົ້ນ. ເຖິງປານນັ້ນເຈົ້າກໍບໍ່ພົ້ນທີ່ຈະຢາກໄດ້ຜົວມາຄອງພັນ ຜົວຂອງເຈົ້າຈະເປັນນາຍຢູ່ເໜືອເພື່ອປົກຄອງເຈົ້າ".*

ການລົງໂທດຢ່າງໜຶ່ງສຳລັບຜູ້ຍິງຄືຄວາມເຈັບປວດເພີ່ມຂຶ້ນເປັນຈຳນວນຫຼາຍຂະນະຕັ້ງທ້ອງແລະເກີດລູກ ການລົງໂທດອີກຢ່າງໜຶ່ງກໍຄືນາງຈະມີຄວາມປາຖະໜາທີ່ຈະແຂ່ງຂັນກັບຜົວໃນການເປັນຜູ້ນຳຄອບຄົວ ແລະນີ້ເອງຈະນຳມາຊຶ່ງການຂາດຄວາມປອງດອງກັນ, ການແຂ່ງຂັນກັນ ແລະຄວາມຂັດແຍ່ງໃນຊີວິດແຕ່ງງານ.

*ປະຖົມມະການ 3:17-19 ແລ້ວພຣະເຈົ້າແຫ່ງຈັກກະວານກໍໄດ້ກ່າວກັບຊາຍນັ້ນວ່າ "ເພາະເຈົ້າໄດ້ຍິນຍອມຟັງຄວາມເມຍ ເຈົ້າໄດ້ກິນໝາກໄມ້ທີ່ເຮົາຫ້າມບໍ່ໃຫ້ກິນນັ້ນ. ພື້ນດິນຈະຖືກສາບແຊ່ງເພາະສິ່ງທີ່ເຈົ້າໄດ້ເຮັດມາ ຊົ່ວຊີວິດເຈົ້າຈະເຮັດວຽກໜັກເພື່ອຫາລ້ຽງທ້ອງ. ທີ່ດິນຈະເກີດຫຍ້າແລະມີໜາມເຕັມໄປທົ່ວແລະຕົວເຈົ້າຈະໄດ້ກິນພືດຜັກໃນປ່າເປັນອາຫານ. ເຈົ້າຈະເຮັດວຽກຍາກຈົນເຫື່ອໄຫຼໄຄຍ້ອຍອອກມາເພື່ອຈະເຮັດໃຫ້ດິນເກີດຜົນພຽງພໍລ້ຽງຊີວິດເຈົ້າຈົນກວ່າ*



*ປະຖົມມະການ 4:25 ອາດາມແລະເມຍໄດ້ລູກຊາຍຜູ້ໜຶ່ງອີກ ເອວາຈຶ່ງເວົ້າວ່າ "ພຣະເຈົ້າໂຜດໃຫ້ຂ້ອຍມີລູກຊາຍອີກຜູ້ໜຶ່ງ ເພື່ອທົດແທນອາເບັນ ຜູ້ທີ່ກາອິນໄດ້ຂ້າ" ດັ່ງນັ້ນນາງຈຶ່ງໃສ່ຊື່ໃຫ້ລູກຊາຍຜູ້ນີ້ວ່າ "ເຊດ".*

ພຣະເຈົ້າຊົງປະທານບຸດໃຫ້ແກ່ອາດາມກັບເອວາອີກຄົນໜຶ່ງຊື່ ເຊດ ເພື່ອມາແທນທີ່ອາເບັນຊຶ່ງຖືກກາອິນຂ້າຕາຍນັ້ນ ພຣະເຈົ້າໄດ້ຊົງສັນຍາໄວ້ແລ້ວວ່າຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາໃຫ້ ຜູ້ຊຶ່ງມາຈາກເຊື້ອສາຍຂອງອາເບັນ ແຕ່ຊາຕານໄດ້ຊັກນຳໃຫ້ກາອິນຂ້າອາເບັນເສຍ ຊາຕານພະຍາຍາມທຸກວິທີທີ່ຈະຂັດຂວາງແຜນການຂອງພຣະເຈົ້າທີ່ຈະສົ່ງ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາຊ່ວຍມະນຸດໃຫ້ພົ້ນ ແຕ່ກໍບໍ່ມີໃຜຕໍ່ສູ້ກັບພຣະເຈົ້າແລະສາມາດຈະເອົາຊະນະພຣະອົງໄດ້ ພຣະເຈົ້າຊົງວາງແຜນທີ່ຈະນຳ "ພຣະຜູ້ຊ່ວຍໃຫ້ລອດພົ້ນ" ມາທາງເຊື້ອສາຍຂອງເຊດ.

ທ່ານຄິດວ່າລູກຫຼານຂອງອາດາມກັບເອວາໄດ້ຮຽນຮູ້ບົດຮຽນຈາກຄວາມຜິດພາດແລະການຕັດສິນໃຈເລືອກທີ່ຊົ່ວໆຂອງຄົນທັງສອງຫຼືບໍ? ເຮົາຈະມາຄົ້ນຫາຄຳຕອບໃນບົດຮຽນຕໍ່ໄປວ່າພວກເຂົາຈະດີຂຶ້ນຫຼືຊົ່ວຮ້າຍຫຼາຍປານໃດ.

* ຂໍໃຫ້ຕອບຄຳຖາມບົດຮຽນບົດທີ 4 ໃນໜ້າ 68 *

ໃຫ້ເຮົາຄິດເຖິງກິ່ງໄມ້ທີ່ຖືກຫັກອອກຈາກຕົ້ນອີກເທື່ອໜຶ່ງ ກິ່ງໄມ້ແຫ້ງຕາຍເພາະຖືກແຍກຈາກຊີວິດທີ່ມັນໄດ້ຮັບຈາກຕົ້ນໄມ້ນັ້ນ ບໍ່ມີທາງໃດທີ່ຈະນຳກິ່ງໄມ້ທີ່ຕາຍແລ້ວນັ້ນກັບໄປຕິດຮ່ວມກັບຕົ້ນໄມ້ເພື່ອໃຫ້ກິ່ງໄມ້ມີຊີວິດໄດ້ອີກ ມະນຸດກໍເຊັ່ນກັນທີ່ເກີດມາໂດຍຖືກແຍກແລະ "ຫຼຸດ" ຈາກແຫຼ່ງຊີວິດຂອງເຮົາຄືພຣະເຈົ້ານັ້ນເອງ ຄົນສ່ວນຫຼາຍຈຶ່ງໃຊ້ຊີວິດຂອງເຂົາດ້ວຍການພະຍາຍາມທີ່ຈະຄົ້ນຫາຫົນທາງທີ່ຈະໃຫ້ຕົວຂອງເຂົາເອງ "ຕິດເຂົ້າກັບ" ແຫຼ່ງຊີວິດຝ່າຍຈິດວິນຍານອີກເທື່ອໜຶ່ງ ຄວາມພະຍາຍາມຂອງຄົນເຫຼົ່ານີ້ອາດຈະເບິ່ງຄືວ່າເຄັ່ງສາສະໜາຫຼາຍ ແຕ່ໂດຍຄວາມເປັນຈິງແລ້ວບໍ່ມີຫຍັງທີ່ເຮົາຈະສາມາດເຮັດດ້ວຍຕົວຂອງເຮົາເອງເພື່ອຈະນຳເຮົາກັບໄປຫາພຣະເຈົ້າໄດ້ອີກ.

ການບໍ່ເຊື່ອຟັງໄດ້ເຮັດໃຫ້ເຮົາແຕກຫັກຈາກພຣະເຈົ້າເຊັ່ນດຽວກັບກິ່ງໄມ້ທີ່ຖືກຫັກອອກຈາກຕົ້ນ ພຣະເຈົ້າຊົງປະຕິເສດເຄື່ອງປົກປິດຂອງອາດາມກັບເອວາແລະພຣະເຈົ້າກໍຊົງປະຕິເສດເຄື່ອງບູຊາຂອງກາອິນ ເພາະພວກເຂົາພະຍາຍາມທີ່ຈະໄດ້ຮັບການຍອມຮັບຈາກພຣະເຈົ້າໂດຍການກະທຳຂອງຕົນເອງ ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດກຳນົດວິທີທີ່ຈະເຮັດໃຫ້ພວກເຂົາເປັນທີ່ຍອມຮັບຈາກພຣະອົງໄດ້ ມະນຸດທຸກຄົນທີ່ກຳເນີດມາໃນໂລກນີ້ຕ່າງກໍຖືກແຍກຈາກພຣະເຈົ້າເພາະສາຍເຫດຈາກການບໍ່ເຊື່ອຟັງແລະການກະບົດຂັດຂືນຂອງພວກເຂົາເອງ ຢ່າງໃດກໍຕາມພຣະເຈົ້າໄດ້ຊົງຈັດຕຽມວິທີທີ່ຈະເຮັດໃຫ້ມະນຸດຊາດທຸກຄົນໄດ້ຮັບການຍອມຮັບຈາກພຣະອົງ ແລະຫຼັງຈາກພວກເຂົາຕາຍແລ້ວກໍຈະໄດ້ໄປຢູ່ກັບພຣະອົງໃນສະຫວັນເປັນນິດນິລັນ.



*ເຈົ້າຄືນໄປສູ່ບ່ອນທີ່ເຈົ້າຖືກຊົງສ້າງຂຶ້ນມາ ເຈົ້າຖືກສ້າງມາຈາກດິນເຈົ້າຈະຄືນໄປເປັນດິນອີກ".*

ພຣະເຈົ້າຊົງກ່າວກັບອາດາມແລະໄດ້ສັ່ງວ່າ ເພາະເຫດຈາກຄວາມບໍ່ເຊື່ອຟັງຂອງລາວ ພຣະເຈົ້າຈຶ່ງຊົງສາບແຊ່ງແຜ່ນດິນ, ມະນຸດຈະຕ້ອງເຮັດວຽກໜັກຍິ່ງຂຶ້ນ ກ່ອນໜ້ານີ້ບໍ່ມີຕົ້ນໜາມໃດໆ ແຕ່ດຽວນີ້ແຜ່ນດິນກັບມີຕົ້ນໄມ້ທີ່ມີໜາມແລະຜັກທີ່ມີໜາມງອກຂຶ້ນ, ທີ່ຈິງແລ້ວສິ່ງຊົ່ວໆສາລະພັດທຸກຢ່າງໃນໂລກທີ່ມີຢູ່ທຸກມື້ນີ້ກໍເກີດຂຶ້ນເນື່ອງຈາກການບໍ່ເຊື່ອຟັງຂອງມະນຸດທີ່ມີຕໍ່ພຣະເຈົ້ານັ້ນເອງ ເຮົາກຳລັງດຳເນີນຊີວິດຢູ່ໃນໂລກທີ່ຍັງຕ້ອງທົນທຸກຈາກຄຳສາບແຊ່ງນັ້ນ ເຮົາຕ້ອງຕໍ່ສູ້ດີ້ນຣົນກັບໂລກໄພໄຂ້ເຈັບ, ຄວາມເຈັບປວດ, ຄວາມອ່ອນແອ,ຄວາມເຈັບປວດຂະນະຖືພາແລະເກີດລູກ, ການເຮັດວຽກງານໜັກ, ສັດຕູພືດສາລະພັດຊະນິດ, ຄວາມທຸກໃຈ, ຄວາມເສົ້າໂສກ ແລະຄວາມຕາຍ ບໍ່ມີຂໍ້ໃດໃນສິ່ງເຫຼົ່ານີ້ທີ່ເຄີຍປາກົດໃນໂລກເລີຍກ່ອນທີ່ອາດາມແລະເອວາບໍ່ເຊື່ອຟັງພຣະເຈົ້າ.

*ປະຖົມມະການ 3:21 ຕໍ່ມາພຣະເຈົ້າໄດ້ເອົາເສື້ອທີ່ເຮັດດ້ວຍໜັງສັດແກ່ອາດາມແລະເມຍຂອງລາວນຸ່ງ.*

ພຣະເຈົ້າບໍ່ຍອມຮັບເຄື່ອງປົກປິດຊຶ່ງອາດາມກັບເອວາໄດ້ເຮັດຂຶ້ນມານັ້ນ ພຣະເຈົ້າໄດ້ສອນພວກເຂົາໃຫ້ຮູ້ວ່າພວກເຂົາບໍ່ສາມາດຈະກະທຳສິ່ງໜຶ່ງສິ່ງໃດເພື່ອຈະເຮັດໃຫ້ຕົນເອງເປັນທີ່ພໍພຣະໄທພຣະເຈົ້າໄດ້ ບໍ່ມີໃຜຈັກຄົນສາມາດເຮັດໃຫ້ຕົນເອງເປັນທີ່ພໍພຣະໄທພຣະເຈົ້າດ້ວຍສິ່ງທີ່ພວກເຂົາກະທຳ ທຸກມື້ນີ້ມະນຸດພະຍາຍາມ

ຫຼາຍສິ່ງຫຼາຍຢ່າງເພື່ອຈະເຮັດໃຫ້ຕົນເອງເປັນທີ່ພໍພຣະໄທພຣະເຈົ້າ ແລະ **“<u>ປົກປິດ</u>”** ການບໍ່ເຊື່ອຟັງຂອງຕົນເໝືອນຢ່າງທີ່ອາດາມກັບເອວາໄດ້ກະທຳມາແລ້ວ ມີບາງຄົນທີ່ຄິດວ່າຖ້າລາວເຄັ່ງສາສະໜາກໍຈະສາມາດ “ປົກປິດ” ຄວາມຜິດທີ່ລາວກະທຳລົງໄປໄດ້ ແຕ່ພຣະເຈົ້າຈະບໍ່ຍອມຮັບພວກເຂົາໂດຍສິ່ງທີ່ພວກເຂົາກະທຳນັ້ນ.

ຄວາມຕາຍຝ່າຍຮ່າງກາຍເປັນອັນດັບທຳອິດທີ່ເປັນຜົນເກີດຂຶ້ນມາໂດຍການບໍ່ເຊື່ອຟັງຂອງອາດາມແລະເອວາ ຄວາມຕາຍຂອງສັດຕົວນັ້ນໄດ້ເຕືອນສະຕິໃຫ້ອາດາມກັບເອວາສຳນຶກວ່າພວກເຂົາສົມຄວນຈະຕາຍເຊັ່ນກັນ ພຣະເຈົ້າຊົງຂ້າສັດໂຕໜຶ່ງແລະຊົງໃຊ້ໜັງຂອງມັນເຮັດເຄື່ອງປົກປິດທີ່ຊົງຍອມຮັບໃຫ້ແກ່ອາດາມແລະເອວາ.

ອາດາມກັບເອວາສະແດງອອກວ່າ ພວກເຂົາເຊື່ອພຣະສັນຍາຂອງພຣະເຈົ້າກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນເມື່ອຄົນທັງສອງຍອມຮັບເຄື່ອງປົກປິດເຫຼົ່ານັ້ນ ພວກເຂົາຈະຕ້ອງເລີກລົ້ມຄວາມຄິດຂອງຕົນເອງກ່ຽວກັບການເຮັດໃຫ້ຕົນເປັນທີ່ພໍພຣະໄທພຣະເຈົ້າເໝືອນຢ່າງທີ່ພວກເຂົາຕ້ອງຍອມຖອດແລະໂຍນເຄື່ອງປົກປິດອັນເດີມຖິ້ມໄປເສຍ ເປັນເລື່ອງສຳຄັນທີ່ຈະຕ້ອງຈຳໄວ້ວ່າ ພຣະເຈົ້າຊົງນຳເຄື່ອງປົກປິດມາສວມໃສ່ໃຫ້ອາດາມກັບເອວາ ພວກເຂົາບໍ່ໄດ້ນຳເຄື່ອງປົກປິດມາສວມໃສ່ໃຫ້ຕົນເອງເລີຍ.

*ປະຖົມມະການ 3:23-24 ສະນັ້ນພຣະເຈົ້າແຫ່ງຈັກກະວານຈຶ່ງຂັບໄລ່ຊາຍຜູ້ນັ້ນໃຫ້ອອກໄປຈາກສວນເອເດນ ແລະໃຫ້ຂຸດດິນພັນໄມ້ໃນບ່ອນ*



*ສາບແຊ່ງແລະຖືກຂັບໄລ່ໃຫ້ອອກຈາກທົ່ງນາແຫ່ງນີ້ ມັນຊຸ່ມໄປດ້ວຍເລືອດນ້ອງຊາຍຂອງເຈົ້າ ດັ່ງກັບວ່າພື້ນດິນນັ້ນອ້າປາກຮັບເລືອດຈາກມືຂອງເຈົ້າເມື່ອຂ້ານ້ອງຊາຍນັ້ນ” ກາອິນຈຶ່ງໜີໄກຈາກພຣະຜູ້ເປັນເຈົ້າໄປອາໄສຢູ່ໃນດິນແດນແຫ່ງໜຶ່ງຊື່ວ່າ: ແດນພະເນຈອນ.*

ພຣະເຈົ້າຊົງສະຖິດຢູ່ທຸກຫົນທຸກແຫ່ງແລະຊົງຮອບຮູ້ທຸກສິ່ງສາລະພັດ ພຣະເຈົ້າຊົງຖາມຄຳຖາມໃນພຣະຄຳພີຂໍ້ນີ້ກັບກາອິນເຖິງວ່າພຣະອົງຈະຊົງຮູ້ຄຳຕອບແລ້ວ ແຕ່ຍັງຊົງປາຖະໜາທີ່ຈະໃຫ້ກາອິນຍອມສາລະພາບຄວາມຜິດຂອງຕົນເອງ ການຊົ່ວຮ້າຍໃດໆທີ່ໄດ້ກະທຳຕໍ່ຜູ້ອື່ນກໍກະທຳຕໍ່ພຣະເຈົ້າດ້ວຍ ເພາະພຣະອົງຊົງເປັນຜູ້ສ້າງມະນຸດທັງປວງ ຢ່າງໃດກໍຕາມກາອິນຍັງຄົງບໍ່ຍອມຟັງພຣະເຈົ້າ ລາວຈຶ່ງຖືກໄລ່ອອກໄປໃຫ້ພົ້ນຈາກພຣະພັກພຣະອົງ ກາອິນປະພຶດຕາມວິທີຂອງຊາຕານໂດຍປະຕິເສດທີ່ຈະປ່ຽນແປງທ່າທີຂອງລາວທີ່ມີຕໍ່ພຣະເຈົ້າແລະທ່າທີທີ່ມີຕໍ່ການບໍ່ເຊື່ອຟັງຂອງຕົນເອງ ກາອິນບໍ່ເຄີຍປ່ຽນວິທີການຂອງລາວເລີຍ, ລາວບໍ່ເຄີຍຍອມຮັບຄວາມຜິດຂອງຕົນເອງແລະບໍ່ເຫັນຄວາມຈຳເປັນທີ່ຈະຕ້ອງຮັບການອະໄພໂທດ ຜົນທີ່ເກີດຂຶ້ນກໍຄື ກາອິນບໍ່ເຄີຍເປັນທີ່ພໍພຣະໄທພຣະເຈົ້າ ເມື່ອກາອິນຕາຍຈິດວິນຍານລາວກໍຖືກແຍກຈາກພຣະເຈົ້າເປັນນິດແລະຖືກຖິ້ມລົງໃນບຶງໄຟ. ເລື່ອງລາວຂອງກາອິນຖືໄດ້ວ່າເປັນອຸທາຫອນສຳລັບເຕືອນສະຕິມະນຸດທຸກຄົນ ເຮົາບໍ່ຢາກຈະຕັດສິນໃຈເລືອກໃນສິ່ງດຽວກັບທີ່ກາອິນໄດ້ເຮັດລົງໄປ ລາວດື້ດ້ານແລະເຫັນແກ່ຕົວ. ດັ່ງນັ້ນ ລາວຈຶ່ງສູນເສຍໂອກາດທີ່ຈະໄດ້ຢູ່ກັບພຣະເຈົ້າຫຼັງຈາກທີ່ລາວຕາຍໄປ ການຕັດສິນໃຈຂອງລາວຊ່າງໂງ່ແທ້ໆ.

*ປະຖົມມະການ 4:8 ຕໍ່ມາກາອີນໄດ້ເວົ້າກັບອາເບັນນ້ອງຊາຍຂອງຕົນວ່າ "ເຮົາພາກັນໄປຍ່າງຫຼິ້ນທີ່ທົ່ງນາເທາະ". ເມື່ອສອງອ້າຍນ້ອງໄປທີ່ທົ່ງນາ ກາອີນກໍໂດດໃສ່ນ້ອງຊາຍຂອງຕົນແລະຂ້າລາວເສຍ.*



ກາອີນປະຕິເສດຂໍ້ສະເໜີຂອງພຣະເຈົ້າແລະໄດ້ຂ້າອາເບັນນ້ອງຊາຍຂອງຕົນ! ກາອີນເຫັນແກ່ຕົວແລະບໍ່ເຊື່ອຟັງທ່າທີຂອງລາວໄດ້ປ່ຽນແປງໄປເປັນຄວາມກຽດຊັງແລະການຄາດຕະກຳ. ເຄື່ອງບູຊາຂອງອາເບັນເປັນທີ່ຍອມຮັບຂອງພຣະເຈົ້າ ດັ່ງນັ້ນເຮົາແນ່ໃຈວ່າລາວໄດ້ໄປຢູ່ກັບພຣະເຈົ້າແລະແມ່ນແຕ່ໃນເວລານີ້ອາເບັນກໍຍັງຢູ່ກັບພຣະອົງໃນສະຫວັນນັ້ນດ້ວຍ.

*ປະຖົມມະການ 4:9-11,16 ພຣະຜູ້ເປັນເຈົ້າຖາມກາອີນວ່າ "ອາເບັນນ້ອງຊາຍຂອງເຈົ້າຢູ່ໃສ?" ລາວຈຶ່ງຕອບວ່າ "ບໍ່ຮູ້ ຂ້າພະອົງເປັນຄົນດູແລຮັກສານ້ອງຊາຍຊັ້ນບໍ?" ແລ້ວພຣະຜູ້ເປັນເຈົ້າກໍຖາມວ່າ "ເປັນຫຍັງເຈົ້າຈຶ່ງເຮັດເລື່ອງອັນໂຫດຮ້າຍເຊັ່ນນີ້? ເລືອດນ້ອງຊາຍຂອງເຈົ້າຮ້ອງຟ້ອງຂຶ້ນມາຫາເຮົາດັ່ງສຽງຂໍຮ້ອງແກ້ແຄ້ນ ເຈົ້າຈະຖືກ*



*ທີ່ລາວຖືກສ້າງຂຶ້ນມາ. ເມື່ອພຣະເຈົ້າຂັບໄລ່ມະນຸດອອກຈາກສວນແລ້ວພຣະອົງກໍເອົາເຄລຸບ (ເທວະດາ) ມາເຝົ້າສວນຢູ່ທາງທິດຕາເວັນອອກ ແລະມີດາບທີ່ລຸກເປັນແສງໄຟແກວ່ງໄປມາທົ່ວທຸກທິດເພື່ອປ້ອງກັນບໍ່ໃຫ້ຜູ້ໃດຜູ້ໜຶ່ງເຂົ້າໄປໃກ້ຕົ້ນໄມ້ທີ່ໃຫ້ຊີວິດນັ້ນ.*



ການບໍ່ເຊື່ອຟັງນຳມາເຖິງຄວາມຕາຍແລະຄວາມຕາຍນຳມາຊຶ່ງການຖືກແຍກອອກຈາກກັນ ບັດນີ້ທັງສອງຄົນໄດ້ຖືກແຍກຈາກພຣະພັກພຣະເຈົ້າ. ຫຼາຍປີຕໍ່ມາອາດາມແລະເອວາກໍຕາຍຝ່າຍຮ່າງກາຍ ຈິດວິນຍານຂອງພວກເຂົາຖືກແຍກອອກຈາກຮ່າງ ເຮົາຮູ້ວ່າພວກເຂົາບໍ່ໄດ້ໄປຢູ່ໃນບຶງໄຟເພາະພວກເຂົາໄດ້ຍອມຮັບທາງຂອງພຣະເຈົ້າແລະເຊື່ອໃນພຣະສັນຍາຂອງພຣະອົງກ່ຽວກັບພຣະຜູ້ຊ່ວຍໃຫ້ລອດພົ້ນນັ້ນ ທຸກມື້ນີ້ທັງອາດາມແລະເອວາຈຶ່ງໄດ້ຢູ່ກັບພຣະເຈົ້າໃນສະຫວັນແລ້ວ.

* ຂໍໃຫ້ຕອບຄຳຖາມບົດຮຽນທີ 3 ໃນໜ້າ 67 *

ເຮັດຕາມວິທີການຂອງພຣະເຈົ້າເທົ່ານັ້ນ ຄືຈະຕ້ອງມີສັດຕາຍແລະເລືອດຂອງມັນຈະຕ້ອງໄຫຼອອກເພື່ອວ່າອາດາມ ແລະເອວາຈະມີເຄື່ອງປົກປິດຊຶ່ງເປັນທີ່ພໍພຣະໄທພຣະເຈົ້າໄດ້ ໃນທຳນອງດຽວກັນພຣະເຈົ້າຈະບໍ່ຍອມຮັບກາອິນແລະອາເບັນນອກເສຍຈາກວ່າພວກເຂົາຈະໄວ້ວາງໃຈໃນພຣະອົງແລະມາຫາພຣະອົງດ້ວຍວິທີການຂອງພຣະອົງທີ່ໄດ້ສັ່ງໄວ້ ພຣະເຈົ້າຈະຊົງຍອມຮັບພວກເຂົາຖ້າພວກເຂົານຳແກະໂຕໜຶ່ງມາຂ້າແລະໃຫ້ເລືອດຂອງມັນໄຫຼອອກເທົ່ານັ້ນ ອາເບັນ ເຊື່ອພຣະເຈົ້າແລະມາຫາພຣະເຈົ້າດ້ວຍວິທີການຂອງພຣະອົງດັ່ງນັ້ນພຣະເຈົ້າຈຶ່ງຊົງຍອມຮັບລາວ ສ່ວນກາອິນມາຫາພຣະເຈົ້າດ້ວຍຄວາມໄວ້ວາງໃຈໃນວິທີການຂອງຕົນເອງ ພຣະເຈົ້າຈຶ່ງຊົງປະຕິເສດລາວ.

*ປະຖົມມະການ 4:6-7 ແລ້ວພຣະຜູ້ເປັນເຈົ້າກໍກ່າວແກ່ລາວວ່າ "ກາອິນເອີຍ ເປັນຫຍັງເຈົ້າຈຶ່ງຄຽດແຄ້ນແລະໜ້າຕາບູດບຶ້ງ? ຖ້າເຈົ້າເຮັດໃນສິ່ງທີ່ຖືກຕ້ອງເຈົ້າກໍຄວນຍິ້ມແຍ້ມແຈ່ມໃສ ແຕ່ດ້ວຍວ່າເຈົ້າເຮັດຊົ່ວຄວາມຊົ່ວກໍເປັນດັ່ງສັດຮ້າຍທີ່ພວມນັ່ງທີ່ປະຕູເຮືອນລໍຄອຍຖ້າຄຸບກິນເຈົ້າ ມັນຢາກປົກຄອງເຈົ້າ ແຕ່ເຈົ້າຕ້ອງເອົາຊະນະມັນໃຫ້ໄດ້".*

ພຣະເຈົ້າຍັງຕິດຕໍ່ກັບກາອິນທີ່ບໍ່ເຊື່ອຟັງ ປະເດັນຫຼັກສຳລັບພຣະຄຳພີຕອນນີ້ຄືຫຍັງ? ປະເດັນຫຼັກນັ້ນກໍຄືຄຳຖາມທີ່ວ່າ "ທ່ານຈະບໍ່ເປັນທີ່ຍອມຮັບຫຼື? ພຣະເຈົ້າຊົງປາຖະໜາທີ່ຈະຍອມຮັບມະນຸດໄດ້ ແຕ່ພວກເຂົາຈະຕ້ອງເຊື່ອພຣະອົງແລະປະພຶດຕາມວິທີການຂອງພຣະອົງເສຍກ່ອນ.

ພວກທຳອິດຄື ກາອິນຊຶ່ງ ເປັນຕົວແທນຂອງກຸ່ມທີ່ມານະມັດສະການພຣະເຈົ້າຕາມຄວາມຄິດຂອງມະນຸດ ພວກທີ່ສອງຄື ອາເບັນຊຶ່ງເປັນຕົວແທນຂອງກຸ່ມທີ່ມານະມັດສະການພຣະເຈົ້າດ້ວຍວິທີການຂອງພຣະເຈົ້າ.

ອາເບັນນຳເອົາແກະໂຕໜຶ່ງຈາກຝູງແກະຂອງລາວມາເປັນເຄື່ອງບູຊາແກ່ພຣະເຈົ້າ ລາວໄດ້ຂ້າແກະໂຕນັ້ນເພື່ອໃຫ້ເລືອດໄຫຼອອກແລະຖວາຍແກະນັ້ນແກ່ພຣະເຈົ້າຕາມທີ່ພຣະອົງໄດ້ຊົງບັນຊາໄວ້ ພຣະເຈົ້າບໍ່ໄດ້ຍອມຮັບລູກແກະຂອງອາເບັນເປັນຄ່າຊົດໃຊ້ສຳຫຼັບການບໍ່ເຊື່ອຟັງຂອງລາວ ແຕ່ພຣະເຈົ້າຊົງໃຫ້ອະໄພໂທດແລະຍອມຮັບອາເບັນເພາະລາວເຊື່ອພຣະເຈົ້າ ລາວມາຫາພຣະເຈົ້າດ້ວຍວິທີການທີ່ພຣະອົງໄດ້ຊົງບັນຊາໄວ້.

ກາອິນນຳພືດຜັກທີ່ຕົນເອງປູກມາຖວາຍພຣະເຈົ້າ ພຣະເຈົ້າຊົງປະຕິເສດຂອງຖວາຍຈາກກາອິນ ເພາະກາອິນບໍ່ໄດ້ມາຫາພຣະເຈົ້າດ້ວຍວິທີການທີ່ພຣະເຈົ້າຊົງບັນຊາໄວ້ ລາວມາຫາພຣະເຈົ້າດ້ວຍວິທີການຂອງລາວ ຕາມຄວາມຄິດຂອງຕົນເອງ ກາອິນບໍ່ໄດ້ເຊື່ອສິ່ງທີ່ພຣະເຈົ້າສັ່ງ ດັ່ງນັ້ນລາວຈຶ່ງບໍ່ໄດ້ໄວ້ວາງໃຈໃນວິທີການຊຶ່ງພຣະເຈົ້າຊົງແຈ້ງແກ່ລາວແລ້ວ.

ພຣະເຈົ້າຊົງປະຕິເສດເຄື່ອງປົກປິດຂອງອາດາມກັບເອວາທີ່ໄດ້ເຮັດຂຶ້ນສັນໃດ ພຣະອົງກໍຊົງປະຕິເສດເຄື່ອງບູຊາຂອງກາອິນສັນນັ້ນ ພຣະເຈົ້າຊົງປາຖະໜາທີ່ຈະສະແດງໃຫ້ອາດາມແລະເອວາເຫັນວ່າພວກເຂົາບໍ່ສາມາດຈະເຮັດໃຫ້ຕົນເອງເປັນທີ່ພໍພະໄທ ພຣະອົງດ້ວຍສິ່ງໜຶ່ງສິ່ງໃດທີ່ພວກເຂົາສາມາດຈະເຮັດໄດ້ ເພາະຈະຕ້ອງ



# ບົດທີ 4

# ກາອິນແລະອາເບັນ

ຈະມີຫຍັງເກີດຂຶ້ນເມື່ອມີໃຜຄົນໜຶ່ງປະຕິເສດທີ່ຈະເຊື່ອພຣະເຈົ້າແລະເລືອກທີ່ຈະບໍ່ເຊື່ອຟັງພຣະອົງ? ການທີ່ຄົນໜຶ່ງຄົນໃດບໍ່ເຊື່ອຟັງຈະມີຜົນຕໍ່ຄົນອື່ນໆຫຼືບໍ? ຈິງແທ້ຫຼືບໍທີ່ວ່າມະນຸດແຕ່ລະຄົນສາມາດເລືອກວິທີການຂອງຕົນເອງເພື່ອຈະໄປເຖິງພຣະເຈົ້າໄດ້? ເຮົາຈະມາຕອບຄຳຖາມເຫຼົ່ານີ້ແລະຄຳຖາມອື່ນໆທີ່ກ່ຽວຂ້ອງຂະນະທີ່ເຮົາສຶກສາເລື່ອງລາວຂອງກາອິນແລະອາເບັນນຳກັນ.

ພຣະເຈົ້າຊົງຮູ້ວ່າມະນຸດທຸກຄົນທີ່ເກີດມາໃນໂລກເປັນຄົນບາບແລະຖືກແຍກຈາກພຣະອົງ ພຣະເຈົ້າຈຶ່ງຊົງວາງແຜນການໄວ້ວິທີໜຶ່ງເພື່ອມະນຸດຈະສາມາດມາເຖິງພຣະອົງແລະໄດ້ຮັບການຍອມຮັບຈາກພຣະອົງໄດ້ ຂໍໃຫ້ຈື່ໄວ້ວ່າພຣະເຈົ້າຊົງເປັນຜູ້ທີ່ເລືອກວິທີການດັ່ງກ່າວ ບໍ່ແມ່ນມະນຸດເປັນຜູ້ເລືອກ.

ພຣະເຈົ້າຊົງບັນຊາແກ່ອາດາມແລະເອວາວ່າ ຖ້າຄົນທັງສອງຢາກໃຫ້ພຣະເຈົ້າຍອມຮັບພວກເຂົາ ພວກເຂົາຈະຕ້ອງນຳແກະໂຕໜຶ່ງມາຖວາຍເປັນເຄື່ອງບູຊາ ສັດໂຕນີ້ຈະຕ້ອງຖືກຂ້າໃນລັກສະນະທີ່ຈະຕ້ອງມີເລືອດໄຫຼອອກ ພຣະເຈົ້າບໍ່ໄດ້ຍອມຮັບເລືອດສັດເປັນເຄື່ອງປົກປິດສຳລັບການບໍ່ເຊື່ອຟັງຂອງມະນຸດ ແຕ່ພຣະອົງຊົງ

ປາຖະໜາໃຫ້ພວກເຂົາຈື່ໄວ້ວ່າ ໂທດຖານສຳລັບການບໍ່ເຊື່ອຟັງຄື ຄວາມຕາຍ ຊຶ່ງຈະເຮັດໃຫ້ພວກເຂົາຕ້ອງໄປສູ່ບຶງໄຟ ນອກຈາກວ່າ ພຣະອົງຈະຊ່ວຍພວກເຂົາໃຫ້ລອດພົ້ນ ຖ້າພວກເຂົາເຊື່ອພຣະເຈົ້າ ແລະປາຖະໜາທີ່ຈະເຮັດຕາມວິທີການຂອງພຣະເຈົ້າແທນທີ່ຈະ ເຮັດຕາມວິທີຂອງຕົນເອງ ພວກເຂົາຈະຕ້ອງນຳແກະໂຕໜຶ່ງມາຂ້າ ຕາມທີ່ພຣະເຈົ້າໄດ້ສັ່ງແກ່ພວກເຂົາ ເຄື່ອງບູຊາດ້ວຍເລືອດເປັນ ສ່ວນໜຶ່ງໃນແຜນການຂອງພຣະເຈົ້າທີ່ຈະຊ່ວຍມະນຸດໃຫ້ລອດພົ້ນ ຈາກຄວາມຊົ່ວຮ້າຍຂອງຊາຕານແລະຄວາມຕາຍ.

*ປະຖົມມະການ 4:1-2 ຕໍ່ມາອາດາມໄດ້ສົມສູ່ກັບເມຍຂອງຕົນແລະ ນາງກໍຖືພາ ນາງເກີດລູກຊາຍຜູ້ໜຶ່ງແລະເວົ້າວ່າ "ເພາະພຣະເຈົ້າ ຊ່ອຍຊູຂ້ອຍ ຂ້ອຍຈຶ່ງໄດ້ລູກຊາຍ" ສະນັ້ນນາງຈຶ່ງຕັ້ງຊື່ໃຫ້ເດັກນ້ອຍ ຜູ້ນີ້ວ່າ 'ກາອິນ' ຕໍ່ມານາງກໍໄດ້ລູກຊາຍຜູ້ໜຶ່ງອີກ ລູກຊາຍຜູ້ນີ້ມີຊື່ວ່າ: 'ອາເບັນ' ລາວເປັນຄົນລ້ຽງສັດ ສ່ວນກາອິນເປັນຄົນເຮັດໄຮ່ໄຖນາ.*

ຫຼັງຈາກທີ່ອາດາມກັບເອວາຖືກໄລ່ອອກຈາກສວນເອເດນ ແລ້ວ ພວກເຂົາກໍມີລູກຊາຍສອງຄົນຊື່ ກາອິນແລະອາເບັນ.

*ປະຖົມມະການ 4:3-5 ຕໍ່ມາມື້ໜຶ່ງກາອິນໄດ້ເອົາພົນລະປູກມາຖວາຍ ແກ່ພຣະຜູ້ເປັນເຈົ້າ ສ່ວນອາເບັນນັ້ນລາວເອົາລູກແກະເກີດຫົວປີໂຕ ໜຶ່ງໃນຝູງມາຂ້າແລະເອົາຊີ້ນສ່ວນທີ່ດີທີ່ສຸດມາຖວາຍແກ່ພຣະຜູ້ເປັນ ເຈົ້າ ພຣະອົງພໍໃຈໃນການຖວາຍຂອງອາເບັນ ແຕ່ບໍ່ພໍໃຈໃນການ ຖວາຍຂອງກາອິນ ກາອິນຈຶ່ງຄຽດແຄ້ນແລະໜ້າບູດບຶ້ງ.*





ກາອິນກັບອາເບັນເຊື່ອວ່າພຣະເຈົ້າມີຈິງ ເຂົາທັງສອງຈຶ່ງມາ ຖວາຍເຄື່ອງບູຊາແກ່ພຣະອົງ ອາດາມກັບເອວາໄດ້ບອກກາອິນກັບ ອາເບັນກ່ຽວກັບພຣະບັນຊາຂອງພຣະເຈົ້າວ່າ ຈະຕ້ອງຖວາຍເຄື່ອງ ບູຊາຢ່າງໃດສຳລັບການບໍ່ເຊື່ອຟັງຂອງຕົນ ອາເບັນນຳລູກແກະໂຕ ໜຶ່ງມາຖວາຍເປັນເຄື່ອງບູຊາແກ່ພຣະເຈົ້າຕາມທີ່ພຣະເຈົ້າໄດ້ຊົງ ບັນຊາໄວ້ນັ້ນ ແຕ່ກາອິນບໍ່ເຊື່ອຟັງແລະໄດ້ນຳໝາກໄມ້ມາຖວາຍ ຊຶ່ງລາວສາມາດນຳລູກແກະໂຕໜຶ່ງຄືອາເບັນນ້ອງຊາຍຂອງຕົນມາ ຖວາຍ ແຕ່ລາວກັບນຳຜົນທີ່ເກີດຂຶ້ນຈາກການກະທຳຂອງລາວເອງ ມາຖວາຍ, ພຣະເຈົ້າບໍ່ຍອມຮັບເຄື່ອງບູຊາຂອງລາວ ອາເບັນເຊື່ອ ຟັງວິທີການຂອງພຣະເຈົ້າ ສ່ວນກາອິນນັ້ນພະຍາຍາມທີ່ຈະໄດ້ຮັບ ການຍອມຮັບຈາກພຣະເຈົ້າຕາມວິທີການຂອງຕົນເອງ. ເຊັ່ນດຽວ ກັບໃບໄມ້ທີ່ອາດາມແລະເອວາເອົາມາສວມໃສ່ຕອນທີ່ຢູ່ໃນສວນ ເອເດນນັ້ນ ບໍ່ວ່າຈະເປັນໃບໄມ້ຫຼືເຄື່ອງບູຊາຂອງກາອິນ ຕ່າງ ກໍບໍ່ເປັນທີ່ຍອມຮັບ ເພາະນັ້ນບໍ່ແມ່ນວິທີການຂອງພຣະເຈົ້າ ກາອິນ ແລະອາເບັນເປັນຕົວແທນທີ່ສະແດງເຖິງກຸ່ມຄົນສອງກຸ່ມນຳກັນ